# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-20 ທັນວາ 2022

ປີທີ 11

ສະບັບທີ 900


## ສະມາຊິກສະພາແຫ່ງຊາດ ສືບຕໍ່ພິຈາລະນາກົດໝາຍ ຈຳນວນ 3 ສະບັບ

(ສພຊ) ໃນລະຫວ່າງວັນທີ 15-16 ທັນວາ 2022 ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຍັງເປັນວາລະສືບຕໍ່ພິຈາລະບັນດາກົດໝາຍ ໂດຍການຜັດປ່ຽນເປັນປະທານກອງປະຊຸມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ແລະ ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມເປັນຄະນະປະທານກອງປະຊຸມມີພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ.



ໃນທີ່ປະຊຸມ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ຮັບຟັງ ແລະ ປະກອບຄຳເຫັນໃສ່ບັນດາເນື້ອໃນກົດໝາຍ ຈຳນວນ 3 ສະບັບ ທີ່ສະເໜີປັບປຸງ 2 ສະບັບ ແລະ ສ້າງໃໝ່ 1 ສະບັບ ຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ ຄື: ກົດໝາຍວ່າດ້ວຍອົງການໄອຍະການທະຫານ (ປັບປຸງ) ທີ່ສະເໜີໂດຍທ່ານ ພົອ. ຈັນສະໝອນ ຈັນຍະລາດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ປັບປຸງ) ທີ່ສະເໜີໂດຍທ່ານ ວຽງທະວິສອນ ເທບພະຈັນ ປະທານອົງການກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍໜັງສືຜ່ານແດນ (ສ້າງໃໝ່) ທີ່ສະເໜີໂດຍທ່ານ ທອງຜ່ານ ສະຫວັນເພັດ ຮອງລັດຖະມົນຕີກະຊວງການຕ່າງປະເທດ; ພ້ອມນັ້ນ, ອະນຸກຳມະການຮັບຜິດຊອບຮ່າງກົດໝາຍທັງ 3 ສະບັບດັ່ງກ່າວ ກໍໄດ້ຂຶ້ນຊີ້ແຈງຕໍ່ທີ່ປະຊຸມ ແລະ ໃຫ້ຄວາມກະຈ່າງແຈ້ງຕາມການເຈາະຈີ້ມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

(ນາງ ປາກາລັກ ພົມມີໄຊ)

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບຄະນະສະພາຜູ້ແທນປະຊາຊົນອິນໂດເນເຊຍ



ໜ້າ 2

## ປະທານອົງການກວດກາແຫ່ງລັດ ສະເໜີຮ່າງກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ)

(ສພຊ) ວັນທີ 13 ທັນວາ ຜ່ານມານີ້, ທ່ານ ຄຳພັນ ພົມມະທັດ ປະທານອົງການກວດກາແຫ່ງລັດ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ:

**I. ສະພາບການຈັດຕັ້ງປະຕິບັດກົດໝາຍ ໃນໄລຍະຜ່ານມາ**

ກົດໝາຍວ່າດ້ວຍການກວດກາລັດໄດ້ສ້າງຂຶ້ນ, ຖືກຮັບຮອງ ແລະ

ອ່ານຕໍ່ໜ້າ 2



## ຄະນະປະຈຳສະພາແຫ່ງຊາດ ສະເໜີລັດຖະບານ 10 ຂໍ້ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ

(ສພຊ) ໃນຕອນບ່າຍຂອງວັນທີ 16 ທັນວາ 2022 ພົທ. ສຸວອນ ເລືອງບຸນມີ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຖະແຫລງຂ່າວກ່ຽວກັບຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າ

ອ່ານຕໍ່ໜ້າ 8



## ລັດຖະມົນຕີກະຊວງຍຸຕິທຳ ສະເໜີຮ່າງກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ)

(ສພຊ) ໃນວັນທີ 12 ທັນວາ 2022, ທ່ານ ໄພວີ ສີບົວລີພາ ລັດຖະມົນຕີກະຊວງຍຸຕິທຳ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ) ວ່າ: ໃນໄລຍະຜ່ານມາ ໄດ້ມີກົດໝາຍວ່າດ້ວຍທະນາຍຄວາມ ສະບັບເລກທີ 06/ສພຊ, ລົງວັນທີ 09 ພະຈິກ 2016

ອ່ານຕໍ່ໜ້າ 7



## ກສຕສ ເຊັນບົດບັນທຶກຮ່ວມກັບກະຊວງອຸດສາຫະກຳ ແລະ ການຄ້າ

(ສພຊ) ວັນທີ 14 ທັນວາ 2022 ທີ່ຫໍສະພາແຫ່ງຊາດ ໄດ້ມີພິທີເຊັນບົດບັນທຶກວ່າດ້ວຍການຮ່ວມມື ແລະ ການປະສານງານ ລະຫວ່າງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ກັບກະຊວງອຸດສາຫະກຳ ແລະ ການຄ້າ ເຊິ່ງລົງນາມໂດຍທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ; ເຂົ້າຮ່ວມເປັນສັກຂີພິຍານມີທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານປະທານ-ຮອງປະທານກຳມາທິການຕ່າງໆພາຍໃນສະພາແຫ່ງຊາດ, ພະນັກງານ-ລັດຖະກອນ ແລະ ພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ຣສ. ປອ.

ອ່ານຕໍ່ໜ້າ 7

## ຄະນະຜູ້ແທນສະພາແຫ່ງຊາດລາວ ແລກປ່ຽນບົດຮຽນກ່ຽວກັບວຽກງານລັດຖະສະພາເຢຍລະມັນ

(ສພຊ) ວັນທີ 12 ທັນວາ 2022, ທີ່ລັດສະຖາສະພາ ແຫ່ງ ສາທາລະນະລັດ ສະຫະພັນເຢຍລະມັນ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ພົບປະເຮັດວຽກກັບທ່ານ ນາງ ເປັດຕຣາ ປາວ ຮອງປະທານລັດຖະສະພາ (ບູນເດັດສະຕາກ) ແຫ່ງ ສສ. ເຢຍລະມັນ ໃນໂອກາດທີ່ໄດ້ນຳພາຄະນະຜູ້ແທນສະພາແຫ່ງຊາດ ເດີນທາງມາແລກປ່ຽນບົດຮຽນກ່ຽວກັບວຽກງານລັດຖະສະພາ ລະຫວ່າງ ສອງອົງການນິຕິບັນຍັດຂອງສອງປະເທດລາວ-ເຢຍລະມັນ.

ໃນການພົບປະເຮັດວຽກຄັ້ງນີ້, ສອງຝ່າຍ ໄດ້ແຈ້ງໃຫ້ກັນ ແລະ ກັນຊາບ ກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງລັດຖະສະພາຂອງປະເທດຕົນ ພ້ອມທັງໄດ້ຕີລາຄາຄືນການພົວພັນຮ່ວມມື ລະຫວ່າງ ສອງປະເທດ ກໍຄື ສອງອົງການ

ອ່ານຕໍ່ໜ້າ 7



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 8

ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!




## ກສຕສ...

ລິນຄຳ ດວງສະຫວັນ ແລະ ທ່ານ ມະໄລທອງ ກົມມະສິດ ໄດ້ຜັດປ່ຽນກັນມີຄຳເຫັນຕໍ່ທີ່ປະຊຸມ ໂດຍທັງສອງຝ່າຍໄດ້ສະແດງຄວາມເຫັນດີເປັນເອກະພາບ, ຍິນດີ ແລະ ຊົມເຊີຍຕໍ່ການເຊັນບົດບັນທຶກການຮ່ວມມື ແລະ ການປະສານງານຂອງສອງຝ່າຍໃນຄັ້ງນີ້ ເຊິ່ງບົດບັນທຶກວ່າດ້ວຍການຮ່ວມມື ແລະ ການປະສານງານ ລະຫວ່າງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ກັບ ກະຊວງອຸດສາຫະກຳ ແລະ ການຄ້າ ຖືວ່າເປັນບົດບັນທຶກສະບັບທຳອິດ ທີ່ສອງພາກສ່ວນໄດ້ລົງລາຍເຊັນຮ່ວມກັນເປັນລາຍລັກອັກສອນ ເຖິງວ່າໄລຍະຜ່ານມາ, ກຳມາທິການ ແລະ ກະຊວງ ໄດ້ມີການພົວພັນ, ປະສານງານ ແລະ ເຮັດວຽກຮ່ວມກັນຢ່າງໃກ້ສິດ ໂດຍສະເພາະການຄົ້ນຄວ້າບັນຫາຕ່າງໆ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນ, ສະໄໝວິສາມັນ ຂອງສະພາແຫ່ງຊາດ ແຕ່ກໍຍັງບໍ່ທັນມີນິຕິກຳສະເພາະທີ່ເປັນບ່ອນອີງໃນການພົວພັນປະສານງານເຊິ່ງກັນແລະກັນ.

ບົດບັນທຶກສະບັບດັ່ງກ່າວປະກອບມີ 4 ໝວດ ແລະ 15 ມາດຕາ ເຊິ່ງໄດ້ກຳນົດກ່ຽວກັບຫລັກການ, ຂອບເຂດ, ລະບຽບການ, ເນື້ອໃນ, ຂັ້ນຕອນ, ວິທີການປະສານງານ ລະຫວ່າງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນການຄົ້ນຄວ້າ, ປຶກສາຫາລື, ສະໜອງ ແລະ ແລກປ່ຽນຂໍ້ມູນຂ່າວສານ ໃນການກະກຽມເນື້ອໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ທີ່ຕິດພັນກັບວຽກງານອຸດສາຫະກຳ ແລະ ການຄ້າ ເຊິ່ງຈະເປັນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ລັດຖະບານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ແນໃສ່ຮັບປະກັນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານໃນການປະຕິ

## ປະທານ...

ປະກາດໃຊ້ໃນປີ 2007 ເປັນຕົ້ນມາ ແລະ ໄດ້ປັບປຸງເທື່ອທີ 1 ແມ່ນປີ 2017 ມາຮອດປີ 2021 ກໍ່ກຳລັງປັບປຸງເທື່ອທີ 2 ຕື່ມອີກ ເພື່ອເປັນບ່ອນອີງໃຫ້ແກ່ການສ້າງ-ປັບປຸງກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດກາລັດແຕ່ລະຂັ້ນ. ຜ່ານການຈັດຕັ້ງປະຕິບັດຜ່ານມາສາມາດເຫັນໄດ້ດ້ານດີດ້ານຕັ້ງໜ້າ ແລະ ດ້ານຄົງຄ້າງ, ສະພາບປາກົດການລ່ວງລະເມີດກົດໝາຍ ແລະ ລະບຽບການຕ່າງໆ ຂອງການຄຸ້ມຄອງບໍລິຫານລັດ ທັງເປັນການປະກອບສ່ວນເຮັດໃຫ້ມີຄວາມສະຫງົບທາງການເມືອງ, ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການລົງທຶນພາຍໃນ, ຕ່າງປະເທດໄດ້ເພີ່ມຂຶ້ນ ແລະ ດຳເນີນຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ປາກົດການຫຍໍ້ທໍ້ຕ່າງໆໄດ້ຮັບການແກ້ໄຂໂດຍພື້ນຖານ.

**II. ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍ**

1. ເຫດຜົນ

ເພື່ອເປັນການລວບລວມເອົາບາງເນື້ອໃນບັນດາກົດໝາຍ ແລະ ລະບຽບການ, ນິຕິກຳອື່ນໆ ທີ່ພົວພັນກ່ຽວກັບວຽກງານກວດກາລັດ ທີ່ໄດ້ກຳນົດໄວ້ສະເພາະເຂົ້າມາໃນຮ່າງກົດໝາຍວ່າດ້ວຍການກວດກາລັດສະບັບປັບປຸງ ເພື່ອຮັບປະກັນຄວາມເປັນເອກະພາບຕໍ່ການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ ແລະ ຫັນວຽກງານກວດກາລັດມີຜົນສັກສິດຕາມກົດໝາຍ.

2. ຄວາມຈຳເປັນ

ກົດໝາຍວ່າດ້ວຍການກວດກາລັດສະບັບນຳໃຊ້ປະຈຸບັນ ໄດ້ຖືກຮັບຮອງ ແລະ ຈັດຕັ້ງປະຕິບັດ ເປັນເວລາປະມານ 5 ປີ, ຜ່ານການປະເມີນ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດຜ່ານມາເຫັນໄດ້ວ່າ: ຍັງມີບາງໝວດ, ບາງມາດຕາ, ບາງເນື້ອໃນ ທີ່ໄດ້ກຳນົດ ມາຮອດປະຈຸບັນຍັງມີບາງອັນບໍ່ທັນສອດຄ່ອງ ແລະ ແທດເໝາະກັບສະພາບການໃໝ່, ການກຳນົດໜ້າທີ່, ສິດ ຂອງປະທານ ແລະ ຂອງອົງການກວດກາລັດແຕ່ລະຂັ້ນຍັງບໍ່ທັນແຈ້ງ, ຮັດກຸມ ແລະ ຄົບຖ້ວນເຊິ່ງມີບາງຂໍ້, ບາງມາດຕາປະຕິບັດໄດ້ຍາກ ຖ້າທຽບໃສ່ເງື່ອນໄຂໃໝ່ ແລະ ມີເນື້ອໃນຈຳນວນໜຶ່ງ ທີ່ມະຕິກົມການເມືອງສູນກາງພັກໄດ້ກຳນົດອອກໃໝ່ ຍັງບໍ່ທັນກຳນົດເຂົ້າໃນກົດໝາຍເຊັ່ນ: ມະຕິສະບັບເລກທີ 07/ກມສພ ວ່າດ້ວຍການປັບປຸງສັບຊ້ອນວຽກງານຂອງລັດຖະບານໄດ້ກຳນົດວ່າ: "ສັບຊ້ອນອົງການກວດກາລັດຖະບານອອກຈາກໂຄງປະກອບການຈັດຕັ້ງຂອງລັດຖະບານ ເປັນອົງການເອກະລາດ ໄປຂຶ້ນກັບປະທານປະເທດ ເອີ້ນວ່າ: ອົງການກວດກາແຫ່ງລັດ". ອີກດ້ານໜຶ່ງເພື່ອຍົກສູງການເຄື່ອນໄຫວວຽກງານກວດກາໃຫ້ກວ້າງອອກກວ່າເກົ່າ ເປັນຕົ້ນໄດ້ເພີ່ມໜ້າທີ່, ຂອບເຂດສິດ ຂອງອົງການກວດກາລັດແຕ່ລະຂັ້ນໃຫ້ຫລາຍຂຶ້ນ, ພາຍຫລັງກົດໝາຍສະບັບປັບປຸງນີ້ ຖືກຮັບຮອງ ແລະ ປະກາດໃຊ້ ຈະໄດ້ນຳໃຊ້ກົດໝາຍນີ້ເປັນບ່ອນອີງຕົ້ນຕໍໃຫ້ແຕ່ການເຄື່ອນໄຫວວຽກງານກວດກາລັດຂອງແຕ່ລະຂັ້ນ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງ ເພື່ອໃຫ້ກົດໝາຍສະບັບດັ່ງກ່າວນີ້ ມີເນື້ອໃນຄົບຖ້ວນ, ພາວະວິໄສ, ຈັດຕັ້ງປະຕິບັດໄດ້ງ່າຍ ທັງສອດຄ່ອງກັບກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ.

**III. ໂຄງປະກອບ ແລະ ເນື້ອໃນຂອງມາດຕາ ທີ່ມີຄວາມສຳຄັນ**

1. ໂຄງປະກອບ

ກົດໝາຍ ວ່າດ້ວຍການກວດກາລັດ (ສະບັບນຳໃຊ້ປະຈຸບັນ) ປະກອບດ້ວຍ 10 ພາກ, 6 ໝວດ ແລະ 80 ມາດຕາ; ຮ່າງກົດໝາຍວ່າດ້ວຍການກວດກາລັດ ສະບັບປັບປຸງ (ໃໝ່) ປະກອບດ້ວຍ 9 ພາກ, 9 ໝວດ ແລະ 81 ມາດຕາ; ນອກນັ້ນ, ຍັງໄດ້ປັບປຸງ, ຈັດລຽງບາງພາກ, ບາງໝວດ ແລະ ບາງມາດຕາ ດັ່ງນີ້:

- ຕັດອອກ 1 ພາກ ຄື: ພາກທີ II ປະເພດ, ບ່ອນອີງ, ຮູບການ, ເນື້ອໃນ ແລະ ເປົ້າໝາຍກວດກາລັດ.

ສຳລັບເນື້ອໃນຂອງພາກທີ່ຖືກຕັດອອກນີ້ ແມ່ນຍ້າຍໄປເປັນໝວດທີ 1 ຂອງພາກທີ III (ຈາກ 10 ພາກ ຍັງເຫລືອ 9 ພາກ)

- ເພີ່ມໃໝ່ 3 ໝວດ ຄື: ໝວດທີ 2, ໝວດທີ 5 ຂອງພາກທີ II ແລະ ໝວດທີ 1 ຂອງພາກທີ III (ຈາກ 6 ໝວດ ເພີ່ມຂຶ້ນເປັນ 9 ໝວດ)

- ຕັດອອກ 5 ມາດຕາ, ເພີ່ມໃໝ່ 6 ມາດຕາ, ປັບປຸງ 59 ມາດຕາ, ຮັກສາເນື້ອໃນເກົ່າ 22 ມາດຕາ.

2. ເນື້ອໃນຂອງບາງມາດຕາທີ່ສຳຄັນ

2.1 ມາດຕາ ທີ່ຕັດອອກປະກອບມີ 5 ມາດຕາ ຄື:

+ ມາດຕາ 11 ປະເພດການກວດກາ;

+ ມາດຕາ 75 ມາດຕະການສຶກສາອົບຮົມ;

+ ມາດຕາ 76 ມາດຕະການທາງວິໄນ;

+ ມາດຕາ 77 ມາດຕະການທາງແພ່ງ;

+ ມາດຕາ 78 ມາດຕະການທາງອາຍາ.

2.2 ມາດຕາ ທີ່ເພີ່ມໃໝ່ປະກອບມີ 6 ມາດຕາ ຄື:

+ ມາດຕາ 35 (ໃໝ່) ທີ່ຕັ້ງຂອງອົງການກວດກາລັດແຕ່ລະຂັ້ນ;

+ ມາດຕາ 39 (ໃໝ່) ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ/ກົມ, ສະຖາບັນ, ພະແນກ ຂອງອົງການກວດກາແຫ່ງລັດ;

+ ມາດຕາ 43 (ໃໝ່) ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂອງກົມກວດກາລັດຂັ້ນກະຊວງ

+ ມາດຕາ 47 (ໃໝ່) ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ ຂະແໜງຂອງອົງການກວດກາລັດຂັ້ນແຂວງ;

+ ມາດຕາ 54 (ໃໝ່) ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານຂອງອົງການກວດກາລັດຂັ້ນເມືອງ;

+ ມາດຕາ 66 (ໃໝ່) ມາດຕະຖານສະເພາະຂອງປະທານ ແລະ ຮອງປະທານ ອົງການກວດກາລັດ,

2.3 ມາດຕາ ທີ່ປັບປຸງປະກອບມີ 59 ມາດຕາ ຄື:

ມາດຕາ 1-15, ມາດຕາ 17-20, ມາດຕາ 22, 24, 26, ມາດຕາ 28-34, ມາດຕາ 36-38, ມາດຕາ 41, 42, 45, 46, 49, 50, 52, 53, ມາດຕາ 55- 64, ມາດຕາ 67-69, ມາດຕາ 71, ມາດຕາ 73-77.

2.4 ມາດຕາ ທີ່ຮັກສາໄວ້ຄືເກົ່າ ປະກອບມີ 22 ມາດຕາ ຄື:

ມາດຕາ 16, 21, 23, 25, 27, 35, 39, 40, 43, 44, 47, 48, 51, 54, 65, 66, 70, 72, 78, 79, 80, 81.

**IV.ຄາດຄະເນຜົນໄດ້ຮັບ**

ພາຍຫລັງກົດໝາຍ ວ່າດ້ວຍການກວດກາລັດ ທີ່ໄດ້ປັບປຸງ ໄດ້ຮັບຮອງ ແລະ ປະກາດໃຊ້ແລ້ວ ຈະກາຍເປັນນິຕິກຳພື້ນຖານ ໃຫ້ວຽກງານຄຸ້ມຄອງ, ການກວດກາ ແລະ ເປັນບ່ອນອີງໃຫ້ການນຳພາ-ຊີ້ນຳ ຂອງຄະນະພັກ, ອົງການປົກຄອງ ແລະ ການເຄື່ອນໄຫວວຽກງານກວດກາລັດຂອງອົງການກວດກາລັດແຕ່ລະຂັ້ນປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງລັດ ຄື:

- ປະເທດຊາດມີຄວາມໝັ້ນຄົງ ແລະ ມີສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ເຂັ້ມແຂງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;

- ສາມາດແກ້ໄຂບັນດາປາກົດການຫຍໍ້ທໍ້, ການສໍ້ລາດບັງຫລວງ, ການລະເມີດກົດໝາຍທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງລັດ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ແລະ ພາກສ່ວນຕ່າງໆຕາມຂອບເຂດການນຳໃຊ້ກົດໝາຍ;

- ຮັບປະກັນໃນການຄຸ້ມຄອງລັດ, ເສດຖະກິດ, ວັດທະນາທຳ-ສັງຄົມ ດ້ວຍກົດໝາຍ ແລະ ສ້າງຄວາມເຂັ້ມແຂງ, ຄວາມເຊື່ອໝັ້ນໃຫ້ປະຊາຊົນບັນດາເຜົ່າ ລວມທັງບັນດາປະເທດໃນພາກພື້ນ ແລະ ສາກົນ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງລາວເຮົາ.

## ຮອງປະທານ...

(ສພຊ) ໃນວັນທີ 12 ທັນວາ 2022 ທີ່ຫໍສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ກີລັງ ດີລາຟາຣາເຣດ ຮອງປະທານກຳມາທິການຮ່ວມມືລັດຖະສະພາສາກົນ, ສະພາຜູ້ແທນປະຊາຊົນ ແຫ່ງ ສ.ອິນໂດເນເຊຍ ພ້ອມດ້ວຍຄະນະ ໃນໂອກາດຢ້ຽມຢາມແລະເຮັດວຽກຢູ່ສປປລາວ.

ໃນໂອກາດນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ຕາງໜ້າສະພາແຫ່ງຊາດລາວ ສະແດງຄວາມຍິນດີຕ້ອນຮັບທ່ານ ກີລັງ ດີລາຟາຣາເຣດ ພ້ອມດ້ວຍຄະນະ ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ໃນຄັ້ງນີ້ ໃນບັນຍາກາດທີ່ສອງປະເທດພວມມີການຈັດກິດຈະກຳຕ່າງໆ ເພື່ອສະເຫລີມສະຫລອງວັນຄົບຮອບ 65 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສປປລາວ ແລະ ສ.ອິນໂດເນເຊຍ (30/8/1957-30/8/2022) ແລະ ໄດ້ຕີລາຄາວ່າການມາຢ້ຽມຢາມຂອງຄະນະຄັ້ງນີ້ເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອ ລະຫວ່າງ 2 ປະເທດ ກໍຄື 2 ອົງການນິຕິບັນຍັດລາວ-ອິນໂດເນເຊຍ; ທ່ານຮອງປະທານສະພາແຫ່ງຊາດ ຍັງສະແດງຄວາມອວຍພອນ ແລະ ຊົມເຊີຍສະພາປະຊາຊົນອິນໂດເນເຊຍທີ່ໄດ້ຮັບການມອບໝາຍເປັນປະທານ AIPA ຄັ້ງທີ 44 ໃນປີ 2023 ໜ້ານີ້. ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ຕີລາຄາສູງຕໍ່ຜົນການພົບປະສອງຝ່າຍ ລະຫວ່າງທ່ານ ກີລັງ ດີລາຟາຣາເຣດ ແລະ ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດລາວ ແລະ ເຫັນດີເປັນເອກະພາບ ກ່ຽວກັບທິດທາງແຜນການພົວພັນຮ່ວມມືລະຫວ່າງ ອົງການນິຕິບັນຍັດຂອງ 2 ປະເທດ.

ໂອກາດດຽວກັນນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ແຈ້ງໃຫ້ຊາບສະພາບການພົ້ນເດັ່ນໃນ ສປປລາວ ເປັນຕົ້ນແມ່ນສະພາແຫ່ງຊາດລາວ ພວມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ເພື່ອພິຈາລະນາ ແລະ ຮັບຮອງເອົາຫລາຍບັນຫາທີ່ສຳຄັນຂອງຊາດຕາມພາລະບົດບາດຂອງຕົນ.

ໃນການພົບປະດັ່ງກ່າວ,ທ່ານ ກີລັງ ດີລາຟາຣາເຣດ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໄດ້ສະຫລະເວລາຕ້ອນຮັບຄະນະ ແລະ ໄດ້ແຈ້ງໃຫ້ຊາບກ່ຽວກັບຈຸດປະສົງຂອງການມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ແມ່ນເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ທີ່ມີມູນເຊື້ອອັນດີງາມມາແຕ່ດົນນານ ລະຫວ່າງສອງປະເທດ ແລະ ສອງອົງການນິຕິບັນຍັດ ໃຫ້ມີການຂະຫຍາຍຕົວ ແລະ ເພື່ອພົບປະແລກປ່ຽນ ລະຫວ່າງກຳມາທິການການຕ່າງປະເທດສະພາແຫ່ງຊາດລາວ ແລະ ກຳມາທິການຮ່ວມມືລັດຖະສະພາສາກົນສະພາຜູ້ແທນປະຊາຊົນອິນໂດເນເຊຍ ແລະ ປຶກສາຫາລືທິດທາງແຜນການຮ່ວມມືໃນຕໍ່ໜ້າ.

ກ່ອນໜ້ານີ້ໃນວັນດຽວກັນ, ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການຕ່າງປະເທດ, ສະພາແຫ່ງຊາດ ແຫ່ງ ສປປລາວ ກໍໄດ້ມີການພົບປະສອງຝ່າຍກັບທ່ານ ກີລັງ ດີລາຟາຣາເຣດ ຮອງປະທານກຳມາທິການຮ່ວມມືລັດຖະສະພາສາກົນ, ສະພາຜູ້ແທນປະຊາຊົນ ແຫ່ງ ສ.ອິນໂດເນເຊຍ ເຊິ່ງທັງສອງຝ່າຍໄດ້ແຈ້ງໃຫ້ກັນແລະກັນຊາບ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແລະ ການເຄື່ອນໄຫວຂອງ 2 ອົງການນິຕິບັນຍັດໂດຍຫຍໍ້, ທັງໄດ້ປຶກສາຫາລືກ່ຽວກັບການພົວພັນຮ່ວມມື 2 ຝ່າຍລາວ-ອິນໂດເນເຊຍ ໂດຍໄດ້ເຫັນດີໃຫ້ມີການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ 2 ສະພາແຫ່ງຊາດ ກໍຄື 2 ກຳມາທິການຕ່າງປະເທດ ຂອງ 2 ປະເທດໃນຕໍ່ໜ້າ, ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ແລະ ບັນຫາອື່ນໆທີ່ສອງຝ່າຍໃຫ້ຄວາມສົນໃຈອີກຈຳນວນໜຶ່ງ.

ໃນໂອກາດນີ້, ຝ່າຍລາວ ຍັງໄດ້ສະແດງການຊົມເຊີຍສະພາປະຊາຊົນອິນໂດເນເຊຍ ໃນການເປັນເຈົ້າພາບກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 44 ໃນປີ 2023 ແລະ ສອງຝ່າຍເຫັນເປັນເອກະພາບໃນການສະໜັບສະໜູນ, ຊ່ວຍເຫລືອກັນ ແລະ ແລກປ່ຽນບົດຮຽນນຳກັນໃນການເປັນເຈົ້າພາບຈັດກອງປະຊຸມໄອປາໃນຕໍ່ໜ້າ.

(ຂ່າວ: ນາງ ປາກາລັກ ພົມມີໄຊ
ພາບ: ນາງ ກຸກກິກ ບຸດດາໄຊ)



# ຄາດໝາຍດ້ານເງິນຕາ ປີ 2023 ຈະຄວບຄຸມອັດຕາເງິນເຟີ້ສະເລ່ຍໝົດປີ ໃຫ້ຢູ່ໃນລະດັບບໍ່ເກີນ 9%

ອ່ານຕໍ່ຈາກສະບັບກ່ອນ...

- ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ບັນດາອົງກອນປົ່ນອ້ອມ, ໃນນີ້, ໄດ້ສົ່ງເສີມການຂະຫຍາຍສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ໂດຍສະເພາະການຊຸກຍູ້ບັນດາສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນໃນການກະກຽມຄວາມພ້ອມຕ່າງໆ, ກະກຽມຄວາມພ້ອມ ແລະ ດຳເນີນຂະບວນການ ເພື່ອສ້າງຕັ້ງບໍລິສັດລາວບໍລິຫານຊັບສິນ ປ່ຽນແທນສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ປະກາດນຳໃຊ້ຜະລິດຕະພັນຄະແນນສິນເຊື່ອບຸກຄົນ (Credit Scoring) ພ້ອມກັບການນຳໃຊ້ຜະລິດຕະພັນຂໍ້ມູນການຊົມໃຊ້ໄຟຟ້າ ສຳລັບວຽກງານຂໍ້ມູນຂ່າວສານສິນເຊື່ອ.

ສຳລັບຜົນການຈັດຕັ້ງປະຕິບັດແຜນເງິນຕາປີ 2022 ມີດັ່ງນີ້:

- ການໝູນໃຊ້ເຄື່ອງມືນະໂຍບາຍເງິນຕາ ເປັນຕົ້ນການປັບຂຶ້ນອັດຕາເງິນແຮຝາກບັງຄັບ, ການປັບປຸງອັດຕາດອກເບ້ຍອ້າງອີງຂອງທະນາຄານແຫ່ງ ສປປລາວ ແລະ ການອອກຈຳໜ່າຍພັນທະບັດທະນາຄານແຫ່ງ ສປປລາວ ໄດ້ປະກອບສ່ວນຄວບຄຸມຈັງຫວະອັດຕາການຂະຫຍາຍຕົວຂອງປະລິມານເງິນ (M2) ໃຫ້ຫລຸດລົງຈາກລະດັບ 47,94% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ໃນມື້ກ່ອນການຈຳໜ່າຍພັນທະບັດທະນາຄານແຫ່ງ ສປປລາວ (ວັນທີ 14 ມິຖຸນາ 2022) ມາຢູ່ໃນລະດັບ 38,55% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ໃນມື້ສຸດທ້າຍຂອງການຈຳໜ່າຍເພື່ອດັດສົມຮ້ານແລກປ່ຽນຕົວແທນຫລຸດລົງພັນທະບັດທະນາຄານແຫ່ງ ສປປລາວ (ວັນທີ 15 ພະຈິກ 2022). ຄຽງຄູ່ກັນນັ້ນ, ທະນາຄານທຸລະກິດພາຍໃນຈຳນວນໜຶ່ງໄດ້ປັບຂຶ້ນດອກເບ້ຍຕາມທະນາຄານແຫ່ງ ສປປລາວ ຊ່ວຍຫລຸດຜ່ອນລະດັບຄວາມຕ້ອງການຊົມໃຊ້ ແລະ ຫລຸດແຮງກະຕຸ້ນອັດຕາເງິນເຟີ້;

- ການຈັດຕັ້ງປະຕິບັດມາດຕະການທາງດ້ານບໍລິຫານ ແລະ ການປັບປຸງວິທີກຳນົດອັດຕາແລກປ່ຽນໃຫ້ແກ່ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນຕົວແທນ ຍືດຍຸ່ນຕາມກົນໄກຕະຫລາດຫລາຍຂຶ້ນ ສົມທົບກັບການອອກພັນທະບັດ ໄດ້ຊ່ວຍຊະລໍການອ່ອນຄ່າຂອງອັດຕາແລກປ່ຽນຈາກລະດັບທີ່ອ່ອນແຮງໄປເຖິງ 20.715 ກີບ/ໂດລາ ມາເປັນ 17.740 ກີບ/ໂດລາ ພາຍໃນມື້ທຳອິດທີ່ໄດ້ມີການຈຳໜ່າຍພັນທະບັດທະນາຄານແຫ່ງ ສປປລາວ ແລະ ໄດ້ສືບຕໍ່ຫລຸດລົງມາຮອດ 15.100 ກີບ/ໂດລາ ກ່ອນຈະເລີ່ມໝັ້ນຄົງຂຶ້ນໃນຈັງຫວະທີ່ຊ້າລົງ, ໄດ້ເຮັດໃຫ້ສ່ວນຕ່າງລະຫວ່າງອັດຕາແລກປ່ຽນເງິນກີບທຽບເງິນໂດລາຂອງທະນາຄານ ແລະ ຕະຫລາດນອກລະບົບໄດ້ແຄບເຂົ້າຈາກລະດັບສູງສຸດ 37,83% ໃນກາງເດືອນມິຖຸນາ ມາຢູ່ໃນລະດັບພຽງ 2,93% ໃນປັດຈຸບັນ ແລະ ປາກົດການປັ່ນປ່ວນອັດຕາແລກປ່ຽນມີລັກສະນະຫລຸດຜ່ອນລົງ;

- ສາມາດແກ້ໄຂສະພາບການຂາດແຄນເງິນຕາໃນການນຳເຂົ້ານ້ຳມັນເຊື້ອໄຟ ຮັບປະກັນໃຫ້ມີນ້ຳມັນເຊື້ອໄຟສະໜອງຢູ່ໃນຂອບເຂດປະເທດໃນລະດັບທີ່ບໍ່ຂາດເຂີນ ແລະ ຍັງຮັກສາລະດັບຄັງຮອງເງິນຕາຕ່າງປະເທດ ຮອດທ້າຍເດືອນກັນຍາ ສາມາດກຸ້ມການນຳເຂົ້າໄດ້ 3,01 ເດືອນ ແລະ ຄາດວ່າໝົດປີຈະສາມາດສືບຕໍ່ກຸ້ມການນຳເຂົ້າໄດ້ບໍ່ຫລຸດ 3 ເດືອນ (ມະຕິສະພາແຫ່ງຊາດ: ບໍ່ຫລຸດ 3 ເດືອນ);

- ເງິນຝາກຂອງທະນາຄານທຸລະກິດສືບຕໍ່ເພີ່ມຂຶ້ນ, ຍອດເຫລືອເງິນຝາກຂອງທະນາຄານທຸລະກິດກວມເອົາ 86,72% ຂອງ GDP ແລະ ຮອດທ້າຍປີ 2022 ຈະເພີ່ມຂຶ້ນໃນລະດັບ 90% ຂອງ GDP (ມະຕິສະພາແຫ່ງຊາດ: 70% ຂອງ GDP ໃນທ້າຍປີ 2022); ສິນເຊື່ອຂະຫຍາຍຕົວໃນຈັງຫວະທີ່ດີກວ່າປີຜ່ານມາ ໂດຍກວມເອົາ 60,58% ຂອງ GDP ແລະ ຈະເພີ່ມຂຶ້ນຢູ່ໃນລະດັບ 65% ໃນທ້າຍປີ 2022 (ມະຕິສະພາແຫ່ງຊາດ: 50% ຂອງ GDP ໃນທ້າຍປີ 2022);

- ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ (NPLs) ຢູ່ໃນລະດັບ 2,13% ແລະ ທ້າຍປີ 2022 ຄາດວ່າຈະຢູ່ໃນລະດັບ 2,3% (ມະຕິສະພາແຫ່ງຊາດ: ບໍ່ເກີນ 3%). ອັນພົ້ນເດັ່ນແມ່ນການປັບປຸງໂຄງສ້າງທະນາຄານທຸລະກິດຂອງລັດ 2 ແຫ່ງ ເປັນທະນາຄານຮ່ວມທຶນ ໄດ້ສ້າງບັນຍາກາດໃໝ່ ສາມາດລະງັບປະກົດການຂາດທຶນຕໍ່ເນື່ອງ ມີການປະກອບສ່ວນເພື່ອການພັດທະນາເສດຖະກິດດີຂຶ້ນ;

- ນອກຈາກນີ້, ຍັງສາມາດບັນລຸໄດ້ຕົວຊີ້ບອກທີ່ກຳນົດໃນວາລະແຫ່ງຊາດໄດ້ດັ່ງນີ້:

1) ສິນເຊື່ອປ່ອຍໃຫ້ແກ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ທີ່ເຂົ້າເຖິງແຫລ່ງທຶນຂອງທະນາຄານ ກວມເອົາອັດຕາສ່ວນປະມານ 30% ຂອງຈຳນວນ MSME ທັງໝົດ (ຄາດໝາຍວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ:35% ໃນປີ2023);

2) ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (ROA) ຂອງທະນາຄານທຸລະກິດທົ່ວລະບົບ ສະເລ່ຍຢູ່ໃນລະດັບ 1,35% ທຽບໃສ່ປີ 2021 ເພີ່ມຂຶ້ນຈາກລະດັບ 0,65% (ຄາດໝາຍວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ: ໃຫ້ເພີ່ມຂຶ້ນທຸກປີ);

3) ອັດຕາສ່ວນຜົນຕອບແທນຈາກທຶນ (ROE) ຂອງທະນາຄານທຸລະກິດທົ່ວລະບົບ ສະເລ່ຍຢູ່ໃນລະດັບ 15,84%ທຽບໃສ່ປີ 2021 ເພີ່ມຂຶ້ນຈາກລະດັບ 11,63% (ຄາດໝາຍວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ: ໃຫ້ເພີ່ມຂຶ້ນທຸກປີ);

4) ຮອດທ້າຍເດືອນກັນຍາ 2022 ການລະດົມທຶນຜ່ານຕະຫລາດທຶນ ກວມເອົາ 15,1% ຂອງ GDP (ຄາດໝາຍວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ: 15% ໃນປີ 2023);

ເຖິງແມ່ນວ່າໃນໄລຍະ 9 ເດືອນຕົ້ນປີ 2022, ທະນາຄານແຫ່ງ ສປປລາວ ສາມາດບັນລຸໄດ້ຄາດໝາຍການເງິນຕາຈຳນວນໜຶ່ງ ແຕ່ຍັງມີບາງຄາດໝາຍທີ່ຍັງບໍ່ສາມາດບັນລຸໄດ້ຄື:

- ອັດຕາເງິນເຟີ້ສະເລ່ຍ 9 ເດືອນຕົ້ນປີ ຢູ່ໃນລະດັບ 17,73% ແລະ ຄາດວ່າສະເລ່ຍໝົດປີ 2022 ຈະຢູ່ໃນລະດັບ 22% ເກີນມະຕິສະພາແຫ່ງຊາດ ທີ່ກຳນົດສະເລ່ຍໝົດປີຢູ່ໃນລະດັບບໍ່ເກີນ 5%;

- ອັດຕາແລກປ່ຽນສະເລ່ຍ 9 ເດືອນຕົ້ນປີ 2022 ທຽບໃສ່ທ້າຍປີ 2021, ເງິນກີບທຽບເງິນໂດລາອ່ອນຄ່າ 19,44% ແລະ ເງິນກີບທຽບເງິນບາດ ອ່ອນຄ່າ 18,02% ແລະ ຄາດວ່າສະເລ່ຍໝົດປີຈະອ່ອນຄ່າຢູ່ໃນລະດັບໃກ້ຄຽງກັບ 9 ເດືອນຕົ້ນປີ 2022 (ມະຕິສະພາແຫ່ງຊາດ: ສະເລ່ຍໝົດປີອ່ອນຄ່າ ຫລື ແຂງຄ່າ ບໍ່ເກີນ 5% ທຽບໃສ່ປີຜ່ານມາ);

- ປະລິມານເງິນ M2 ຮອດທ້າຍເດືອນກັນຍາ 2022 ເພີ່ມຂຶ້ນ 39,69% ແລະ ຄາດວ່າຮອດທ້າຍປີ 2022 ຈະເພີ່ມຢູ່ໃນລະດັບ 42%-44% ທຽບໃສ່ທ້າຍປີຜ່ານມາ ເກີນລະດັບທີ່ສະພາໄດ້ຮັບຮອງ ບໍ່ເກີນ 22% ທຽບໃສ່ປີຜ່ານມາ. ໃນນີ້, ປະລິມານເງິນ M2 ທີ່ເປັນເງິນຕາຕ່າງປະເທດໄດ້ກວມເອົາອັດຕາສ່ວນ 65,03% ຂອງປະລິມານເງິນທັງໝົດ. ສະນັ້ນ, ຖ້າຫັກລົບປັດໄຈການປ່ຽນແປງຂອງອັດຕາແລກປ່ຽນ, ປະລິມານເງິນ M2 ຈະເພີ່ມຂຶ້ນພຽງ 9,95% ເທົ່ານັ້ນ;

ນອກຈາກນີ້, ຍັງບໍ່ສາມາດປະຕິບັດຄາດໝາຍວາລະແຫ່ງຊາດໄດ້ຄື:

1) ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຂອງທະນາຄານ ແລະ ຕະຫລາດນອກລະບົບ ສະເລ່ຍ 9 ເດືອນຕົ້ນປີ 2022 ຢູ່ໃນລະດັບ 12,33% (ຄາດໝາຍວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ: ບໍ່ເກີນ 2% ໃນປີ 2023) ແລະ ຢູ່ໃນລະດັບ4,27% ສຳລັບອັດຕາເງິນກີບທຽບໃສ່ເງິນບາດ;

2) ອັດຕາສ່ວນສິນເຊື່ອໃຫ້ຂະແໜງກະສິກຳ ແລະ ຫັດຖະກຳ ຢູ່ໃນລະດັບ 5,59% (ຄາດໝາຍວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ: ຢ່າງໜ້ອຍ 10% ໃນປີ 2023);

**ສຳລັບຄາດໝາຍດ້ານເງິນຕາປີ 2023:**

1) ຄວບຄຸມອັດຕາເງິນເຟີ້ສະເລ່ຍໝົດປີໃຫ້ຢູ່ໃນລະດັບບໍ່ເກີນ9%;

2) ຄຸ້ມຄອງໃຫ້ອັດຕາແລກປ່ຽນໝັ້ນຄົງສອດຄ່ອງກັບລະດັບດຸນຍະພາບທາງດ້ານເສດຖະກິດ-ເງິນຕາ ແລະ ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້;

3) ຄວບຄຸມປະລິມານເງິນ M2 ໃຫ້ຂະຫຍາຍຕົວ ບໍ່ເກີນ 26% ທຽບໃສ່ປີຜ່ານມາ;

4) ສ້າງຄວາມເຂັ້ມແຂງຄັງສຳຮອງເງິນຕາຕ່າງປະເທດ ໃຫ້ສາມາດກຸ້ມການນຳເຂົ້າໄດ້ບໍ່ຫລຸດ 3 ເດືອນ;

5) ຊຸກຍູ້ທະນາຄານທຸລະກິດສືບຕໍ່ລະດົມເງິນຝາກ ໃຫ້ຍອດເຫລືອເງິນຝາກຂອງທະນາຄານທຸລະກິດບັນລຸໄດ້ 85% ຂອງ GDP;

6) ຊຸກຍູ້ໃຫ້ທະນາຄານທຸລະກິດປ່ອຍສິນເຊື່ອໃຫ້ໂຄງການທີ່ມີປະສິດທິຜົນ ໂດຍສຸມໃສ່ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກເປັນບູລິມະສິດ, ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຮັດໃຫ້ຍອດເຫລືອສິນເຊື່ອຂອງຂະແໜງການທະນາຄານບັນລຸໄດ້ 65% ຂອງ GDP;

7) ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຂອງທະນາຄານທຸລະກິດ ໃຫ້ຢູ່ໃນລະດັບເກີນ 3%

# ລາຍງານຄວາມຄືບໜ້າການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ

ອ່ານຕໍ່ຈາກສະບັບກ່ອນ...

- ຂະຫຍາຍການນຳໃຊ້ເຄື່ອງມືທັນສະໄໝໃນການແຈ້ງພາສີແບບເອເລັກໂຕຣນິກ(ລວມທັງການນຳເຂົ້ານ້ຳມັນເຊື້ອໄຟ); ຍົກລະດັບລະບົບແຈ້ງພາສີ ASYCUDA ເປັນລະບົບແຈ້ງພາສີເອເລັກໂຕຣນິກປະຕູດຽວ (Lao National Single Window); ໄດ້ຊຸກຍູ້ໃຫ້ຫົວໜ່ວຍທຸລະກິດແຈ້ງອາກອນຜ່ານລະບົບທັນສະໄໝ TaxRIS ໄດ້ 64.563 ຫົວໜ່ວຍ (67,9% ຂອງຫົວໜ່ວຍທຸລະກິດທັງໝົດ 135.789 ຫົວໜ່ວຍ) ເຮັດໃຫ້ເງິນໝູນວຽນຊຳລະອາກອນ ຂະຫຍາຍຕົວເປັນມູນຄ່າປະມານ 12.224 ຕື້ກີບ; ແລະ ຂະຫຍາຍຖານອາກອນມູນຄ່າເພີ່ມ ໄດ້ທັງໝົດ 9.391 ຫົວໜ່ວຍ ເທົ່າກັບ 89,49% ຂອງຫົວໜ່ວຍທັງໝົດໃນທົ່ວປະເທດ ເຊິ່ງເຮັດໃຫ້ການເກັບລາຍຮັບເພີ່ມຂຶ້ນ 7-8%.

- ໄດ້ກວດກາຄືນບັນດາໂຄງການເຊົ່າ ແລະ ສຳປະທານທີ່ດິນລັດໃນທົ່ວປະເທດ ເຊິ່ງໄດ້ສຳເລັດ 10 ໂຄງການ, ແຕ່ຍັງມີຫລາຍໂຄງການທີ່ຕ້ອງໄດ້ເລັ່ງກວດກາຄືນ (ແຜນການ: 66 ໂຄງການ). ພ້ອມນັ້ນ, ໄດ້ປັບປຸງຖານຂໍ້ມູນໂຄງການເຊົ່າ-ສຳປະທານໃນແຕ່ລະທ້ອງຖິ່ນ ເຊິ່ງຈະສູ້ຊົນໃຫ້ສຳເລັດຕາມຄາດໝາຍໃນທ້າຍປີ 2022.

- ເລັ່ງຊຸກຍູ້ການຂຶ້ນທະບຽນແຮງງານຕ່າງປະເທດ ເພື່ອເປັນຂໍ້ມູນໃນການຄຸ້ມຄອງ ແລະ ເກັບລາຍຮັບຈາກແຮງງານຕ່າງປະເທດ ເຂົ້າສູ່ງົບປະມານ, ມາຮອດປັດຈຸບັນ ໄດ້ເລີ່ມຂຶ້ນທະບຽນແຮງງານຕ່າງປະເທດ ຢູ່ນະຄອນຫລວງວຽງຈັນ ແລະ ເຂດເສດຖະກິດພິເສດສາມຫລ່ຽມຄຳ ຈຳນວນ 2,8.34 ຄົນ, ຜ່ານການຈັດຕັ້ງປະຕິບັດມາດຕະການຕ່າງໆ ໄດ້ເຮັດໃຫ້ການເກັບລາຍຮັບງົບປະມານລັດໃນໄລຍະ 11 ເດືອນ ບັນລຸໄດ້ 28.455 ຕື້ກີບ, ເພີ່ມຂຶ້ນປະມານ 26% ເປັນເງິນເທົ່າກັບ 5,849 ຕື້ກີບ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ແລະ ຄາດວ່າໝົດປີ 2022 ຄາດສາມາດບັນລຸໄດ້ 32,447 ຕື້ກີບ ຫລືເທົ່າກັບ 15,28% ຂອງ GDP ຕາມຄາດໝາຍທີ່ກຳນົດໄວ້ໃນວາລະແຫ່ງຊາດ,

3. ວຽກຈຸດສຸມສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ, ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ

- ສຸມໃສ່ຄຸ້ມຄອງລາຍຈ່າຍໄປຕາມທິດປະຢັດ ແລະ ຕ້ານການຟຸມເຟືອຍ ຕາມດຳລັດສະບັບເລກທີ 205/ລບ ໂດຍສະເພາະການຫລຸດລາຍຈ່າຍ ແລະ ເລື່ອນລາຍຈ່າຍບາງຊ່ວງ ເປັນຕົ້ນລາຍຈ່າຍບໍລິຫານທີ່ເຫັນວ່າບໍ່ຈຳເປັນ ເຊິ່ງຄາດວ່າໃນປີ 2022 ລາຍຈ່າຍຕໍ່ GDP ຈະຫລຸດລົງມາເປັນ 16,27% ແລະ ສາມາດປະຢັດງົບປະມານໄດ້ປະມານ 138 ຕື້ກີບ, ການຂາດດຸນງົບປະມານ ຈະຢູ່ໃນລະດັບ 0,99% ຕໍ່ GDP ເຊິ່ງຕ່ຳກວ່າ 2,2% ຕໍ່ GDP ຄາດໝາຍຂອງວາລະແຫ່ງຊາດ,

- ດ້ານລາຍຈາຍການລົງທຶນຂອງລັດ, ໄດ້ຈຳກັດໂຄງການໃໝ່ທີ່ບໍ່ທັນມີຄວາມຈຳເປັນ, ພ້ອມທັງລົງກວດກາ ແລະ ໂຈະບັນດາໂຄງການທີ່ບໍ່ມີຄວາມຄືບໜ້າຈຳນວນໜຶ່ງ, ການຫັກລົບມູນຄ່າໂຄງການທີ່ເກີນມູນຄ່າສັນຍາ ແລະ ມູນຄ່າສະພາຮັບຮອງ ເຫັນວ່າຍັງມີຄວາມຊັກຊ້າ ເຊິ່ງມີພຽງຈຳນວນ 91 ໂຄງການ ເປັນມູນຄ່າປະມານ 727,22 ລ້ານກີບ, ສຳລັບການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ, ໄດ້ສືບຕໍ່ແກ້ໄຂດ້ວຍນະໂຍບາຍພັນທະບັດ ແລະ ອວ່າຍໜີ້ 3 ແຈ ບ້ວງ 10,000 ຕື້ກີບ ແລະ ຂຶ້ນແຜນແກ້ໄຂໜີ້ສິນທີ່ມີມູນຄ່າຄ້າງຊຳລະ 300 ລ້ານກີບລົງມາ.

- ໄດ້ເປັນເຈົ້າການເຈລະຈາຂໍເລື່ອນການຈ່າຍໜີ້ສິນຕ່າງປະເທດ ແລະ ລະດົມແຫລ່ງທຶນຈຳນວນໜຶ່ງ ເພື່ອປະຕິບັດຂໍ້ຜູກພັນສັນຍາຂອງບັນດາເຈົ້າໜີ້ ອີງຕາມແຜນບໍລິຫານໜີ້ສິນ ປີ 2022 ແລະ ໄລຍະກາງ ເພື່ອບໍ່ໃຫ້ຕົກເປັນປະເທດ ທີ່ບໍ່ສາມາດຊຳລະໜີ້ໄດ້.

- ການປະຕິບັດດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ມາຮອດປັດຈຸບັນໄດ້ສຳເລັດການເກັບກຳຂໍ້ມູນດ້ານພາຫະນະຈາກພາກສ່ວນຕ່າງໆຂອງລັດ ໄດ້ຈຳນວນ 39.754 ຄັນ, ໃນນັ້ນ ລົດໃຫຍ່ 14.564 ຄັນ ເຊິ່ງໄດ້ສຳເລັດການຕິດກາໝາຍລົດບໍລິຫານ ແລະ ຄິວອາໂຄດ (QR Code) 38 ພາກສ່ວນຂັ້ນສູນກາງ ແລະ 2 ແຂວງ, ພ້ອມທັງໄດ້ປ້ອນຂໍ້ມູນເຂົ້າລະບົບຄຸ້ມຄອງຊັບສິນແຫ່ງລັດ; ນອກຈາກນັ້ນ, ໄດ້ສຳເລັດການຈັດຊື້ລົດໄຟຟ້າຈຳນວນໜຶ່ງ ແລະ ກະກຽມປະກອບລົດປະຈຳຕຳແໜ່ງໃຫ້ເປົ້າໝາຍຈຳນວນໜຶ່ງ.

- ຄະນະປະຕິຮູບຂັ້ນສູນກາງໄດ້ສຳເລັດຄົ້ນຄວ້າຮູບແບບວິທີການປະຕິຮູບ, ປັບປຸງໂຄງປະກອບການຈັດຕັ້ງ-ສະພາບໍລິຫານ ແລະ ໂຄງສ້າງດ້ານການເງິນ ຂອງລັດວິສາຫະກິດໄຟຟ້າລາວ,ລັດວິສາຫະກິດການບິນລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟລາວ ແລະ 2 ທະນາຄານທຸລະກິດລັດ, ພ້ອມດຽວກັນ, ໄດ້ຈັດແບ່ງປະເພດລັດວິສາຫະກິດ ຕາມ 4 ປະເພດການປະຕິຮູບ, ໄດ້ດຳເນີນການປະຕິຮູບທຸລະກິດຂອງ 2 ທະນາຄານລັດ ແລະ ໄດ້ຂາຍຮຸ້ນລັດວິສາຫະກິດທີ່ຂາດທຶນຕໍ່ເນື່ອງໃຫ້ພາກເອກະຊົນມາຮ່ວມທຶນ (ລັດວິສາຫະກິດໄປສະນີລາວ) ແລະ ໄດ້ຍຸບເລີກບາງຫົວໜ່ວຍ (ບໍລິສັດທ່ອງທ່ຽວລາວອິນເຕີ) ເຊິ່ງຄິດໄລ່ເປັນມູນຄ່າ 1.047,19 ຕື້ກີບ.

**4. ວຽກຈຸດສຸມດ້ານການສ້າງສະຖຽນລະພາບເງິນຕາ**

- **ການເຂົ້າເຖິງແຫລ່ງທຶນ:**

- ໄດ້ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຫົວໜ່ວຍຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ສາມາດເຂົ້າເຖິງແຫລ່ງສິນເຊື່ອຫລາຍຂຶ້ນ ໂດຍສະເພາະໃນຂົງເຂດການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງ ຮອດເດືອນກັນຍາ 2022, ທະນາຄານທຸລະກິດໄດ້ສະໜອງສິນເຊື່ອໃຫ້ MSME ກວມເອົາ 30% ຂອງຈຳນວນ MSME ທັງໝົດ (ຄາດໝາຍວາລະແຫ່ງຊາດ: ກວມເອົາ 35% ໃນປີ 2023), ສຳລັບສິນເຊື່ອ SME ບ້ວງ 300 ຕື້ກີບ ຜ່ານ 4 ທະນາຄານທຸລະກິດ ໄດ້ປ່ອຍກູ້ໃຫ້ລູກຄ້າທັງໝົດແລ້ວ ຈຳນວນ 253 ສັນຍາ ແລະ ທະນາຄານສາມາດໝູນວຽນຕົ້ນທຶນກັບຄືນໃຫ້ລູກຄ້າລາຍໃໝ່ໄດ້ຈຳນວນ 15,5 ຕື້ກີບ.

- ໄດ້ຊຸກຍູ້ການຈັດຕັ້ງປະຕິບັດໂຄງການສິນເຊື່ອສະເພາະກິດຂອງທະນາຄານແຫ່ງ ສປປລາວ ເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19 (ບ້ວງ 1.800 ຕື້ກີບ) ເຊິ່ງມາຮອດປັດຈຸບັນມີຍອດເຫລືອສິນເຊື່ອ ກວມເອົາ 92,4% ຂອງແຜນການປ່ອຍສິນເຊື່ອທັງໝົດ; ພ້ອມດຽວກັນນັ້ນ, ໄດ້ຊຸກຍູ້ທະນາຄານທຸລະກິດ ປະຕິບັດນະໂຍບາຍຜ່ອນຜັນສິນເຊື່ອໃຫ້ແກ່ລູກຄ້າ ທີ່ໄດ້ຮັບຜົນກະທົບຈາກການລະບາດພະຍາດໂຄວິດ-19 ເຊິ່ງມາຮອດທ້າຍເດືອນກັນຍາ 2022 ປະຕິບັດໄດ້ 4.833 ລາຍ ເປັນມູນຄ່າປະມານ 15.996 ຕື້ກີບ ຫລື ເທົ່າກັບ 13,3% ຂອງຍອດເຫລືອສິນເຊື່ອທະນາຄານທຸລະກິດ.

ອ່ານຕໍ່ສະບັບໜ້າ...

# ກອງປະຊຸມໃຫຍ່ ຄັ້ງທີ II ຂອງໜ່ວຍຊາວໜຸ່ມ ຮາກຖານສະພາປະຊາຊົນແຂວງຈຳປາສັກ



(ສພຊ) ໃນຕອນເຊົ້າ ຂອງວັນທີ 13 ທັນວາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ, ກອງປະຊຸມໃຫຍ່ ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງຈຳປາສັກ ໄດ້ໄຂຂຶ້ນຢ່າງເປັນທາງການ ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ສົມສີ ມະນີນິນ ກຳມະການພັກແຂວງ, ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງຈຳປາສັກ, ສະຫາຍ ໃຈສະຫວັນ ຈັນວັນຄຳ ຮອງເລຂາຄະນະບໍລິຫານງານຊາວໜຸ່ມ ປປລ ແຂວງຈຳປາສັກ ແລະ ສະຫາຍ ແພງວິໄລ ສີອາລຸນ ຮອງເລຂາທິການສະພາປະຊາຊົນແຂວງ, ເລຂາໜ່ວຍຊາວໜຸ່ມຮາກຖານ ສະພາປະຊາຊົນແຂວງ, ມີຄະນະປະທານສະຫະພັນກຳມະບານຮາກຖານ, ປະທານໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງ, ຄະນະນຳໜ່ວຍຊາວໜຸ່ມຮາກຖານຂົງເຂດປົກປ້ອງກົດໝາຍ ແລະ ສະມາຊິກຊາວໜຸ່ມພາຍໃນໜ່ວຍຮາກຖານສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໄດ້ຜ່ານມະຕິຕົກລົງວ່າດ້ວຍການອະນຸມັດໃຫ້ຄະນະໜ່ວຍຮາກຖານຊາວໜຸ່ມສະພາປະຊາຊົນແຂວງເປີດກອງປະຊຸມໃຫຍ່ ຄັ້ງທີ II ແລະ ຜ່ານບົດສະຫລຸບການເຄື່ອນໄຫວວຽກງານ 5 ປີ (2018-2022) ຂອງໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງ ໂດຍໄດ້ຍົກໃຫ້ເຫັນຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ວາງທິດທາງແຜນການໃນ 5 ໃນຕໍ່ໜ້າ ທັງຜ່ານບົດສຳຫລວດການນຳພາຂອງຄະນະໜ່ວຍຊາວໜຸ່ມຮາກຖານໃນໄລຍະ 5 ປີຜ່ານມາ ແລະ ຄະນະຊຸດເກົ່າໄດ້ກ່າວລາໜ້າທີ່.

ໃນວາລະດຽວກັນ, ສະຫາຍ ໃຈສະຫວັນ ຈັນວັນຄຳ ໄດ້ຂຶ້ນຜ່ານມາດຖານເງື່ອນໄຂຂອງຜູ້ທີ່ຈະສະໝັກຮັບເລືອກຕັ້ງເປັນຄະນະໜ່ວຍຊາວໜຸ່ມ ແລະ ປະກາດຄະນະກຳມະການຄວບຄຸມການປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງຈຳປາສັກ ຊຸດໃໝ່ ແລະ ສະຫາຍ ສົມສີ ມະນີນິນ ຍັງໄດ້ມີຄຳເຫັນໂອ້ລົມ, ໃຫ້ທິດຊີ້ນຳຕໍ່ການປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຊຸດໃໝ່ໃນຄັ້ງນີ້ອີກດ້ວຍ.

ກອງປະຊຸມໄດ້ໃຊ້ສິດປະຊາທິປະໄຕ ປ່ອນບັດຄັດເລືອກເອົາຄະນະໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງຈຳປາສັກ ຊຸດໃໝ່ ສາມາດເລືອກໄດ້ຄື: ສະຫາຍ ແພງວິໄລ ສີອາລຸນ ເປັນເລຂາໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງ, ສະຫາຍ ໄຊຊະນະ ວັນນະພອນ ເປັນຮອງເລຂາ, ສະຫາຍ ນາງ ອໍລະດີ ເກດດາ ເປັນຮອງເລຂາ ຮັບຜິດຊອບວຽກງານກວດກາ.

(ນັກຂ່າວ ສພຊ ຈຳປາສັກ)

# ສພຊ ຫົວພັນ ສຳເລັດການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022

(ສພຊ) ວັນທີ 14 ທັນວາ 2022 ໜ່ວຍພັກສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມປະເມີນຜົນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງສະຫາຍ ສົມສັກ ດອນຈານິດ ກຳມະການພັກແຂວງ, ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີຜູ້ຕາງໜ້າຈາກຄະນະຈັດຕັ້ງແຂວງ, ຄະນະກວດກາພັກ ແລະ ຄະນະໂຄສະນາອົບຮົມແຂວງ ຕະຫລອດຮອດສະມາຊິກພັກສົມບູນ-ສຳຮອງພາຍໃນໜ່ວຍ.



ກອງປະຊຸມຄັ້ງນີ້, ໄດ້ເຊື່ອມຊຶມເອກະສານສຳຄັນຄື ຄຳສັ່ງເລກທີ 01/ກມສພ, ລົງວັນທີ 3/1/2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຄຳແນະນຳເລກທີ 291/ ຄຈສພ, ລົງວັນທີ 26/4/2018 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງກົມການເມືອງສູນກາງພັກ ແລະ ຜ່ານບົດສະຫລຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ແລະ ທິດທາງແຜນການ 2023 ຂອງໜ່ວຍພັກສະພາປະຊາຊົນແຂວງຫົວພັນ. ພ້ອມນີ້, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ພ້ອມກັນປະກອບຄຳເຫັນຢ່າງກົງໄປກົງມາ ໃສ່ບົດສະຫລຸບ ແລະ ທິດທາງ ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນ, ສາມາດຈັດຕັ້ງປະຕິບັດໄດ້. ຈາກນັ້ນ, ກອງປະຊຸມໄດ້ຈັດຕັ້ງການປະເມີນຜົນໜ່ວຍພັກ ແລະ ສະມາຊິກພາຍໃນໜ່ວຍພັກ ເຊິ່ງມີສະມາຊິກພັກທັງໝົດ 31 ສະຫາຍ ຍິງ 9 ສະຫາຍ, ປະເມີນຕົວຈິງມີ 24 ສະຫາຍ ຍິງ 8 ສະຫາຍ ເຊິ່ງແຕ່ລະສະຫາຍໄດ້ຜ່ານໃບສຳຫລວດຕົນເອງພ້ອມກັນຕີລາຄາປະເມີນຜົນຕາມ 5 ມາດຖານຂອງການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຜ່ານການປະເມີນໜ່ວຍພັກ, ສະມາຊິກພັກຄັ້ງນີ້ໄດ້ປະເພດແຂງ 24 ສະຫາຍ ກາງ, ອ່ອນ ແມ່ນບໍ່ມີ; ກອງປະຊຸມໄດ້ປະຊາມະຕິຮັບຮອງເອົາໜ່ວຍພັກຂອງຕົນ ເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ພ້ອມທັງສະເໜີຂັ້ນເທິງອອກໃບຢັ້ງຢືນຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022.

ຕອນທ້າຍກອງປະຊຸມ, ສະຫາຍ ສົມສັກ ດອນຈານິດ ໃນນາມຕາງໜ້າໃຫ້ຄະນະພັກຂັ້ນເທິງ ຍັງໄດ້ມີຄຳເຫັນໂອ້ລົມ ເຊິ່ງສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງໜ່ວຍພັກ ກໍຄືບັນດາສະຫາຍສະມາຊິກພັກພາຍໃນໜ່ວຍທີ່ຍາດມາໄດ້ ໃນໄລຍະ 1 ປີຜ່ານມາ ບົນພື້ນຖານຄວາມສາມັກຄີເປັນເອກະພາບຂອງສະມາຊິກພັກ ທີ່ພ້ອມກັນເຮັດສຳເລັດໜ້າທີ່ການເມືອງຂອງຕົນ. ພ້ອມນັ້ນ, ສະຫາຍຍັງໄດ້ໃຫ້ທິດເຍືອງທາງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ ເປັນຕົ້ນແມ່ນຕ້ອງໄດ້ສືບຕໍ່ເປັນເຈົ້າການແກ້ໄຂບັນຫາທີ່ຍັງຄົງຄ້າງ, ເພີ່ມຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງສະມາຊິກພັກໃຫ້ສູງຂຶ້ນ, ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີເປັນເອກະພາບພາຍໃນໜ່ວຍພັກ ໃຫ້ມີຄວາມໜັກແໜ້ນ, ຖືເອົາວຽກງານສຶກສາອົບຮົມການເມືອງແນວຄິດ ໃຫ້ແກ່ພະນັກງານ, ສະມາຊິກພັກ ເປັນບັນຫາສຳຄັນຕົ້ນຕໍ ເພື່ອເຮັດໃຫ້ເຂົາເຈົ້າມີແນວຄິດອຸ່ນອຽນທຸ່ນທ່ຽງ, ມີຄວາມບຸກບືນຕໍ່ໜ້າທີ່ວຽກງານ, ມີສະຕິຕໍ່ການຈັດຕັ້ງ, ສະກັດກັ້ນຕ້ານທຸກປາກົດການຫຍໍ້ທໍ້ຕ່າງໆ, ສິ່ງສຳຄັນຢ່າງໜຶ່ງຕ້ອງເປັນແບບຢ່າງນຳໜ້າໃນທຸກຂະບວນການວຽກງານ ສືບຕໍ່ປັບປຸງແບບແຜນວິທີນຳພາ-ຊີ້ນຳຈັດຕັ້ງປະຕິບັດວຽກງານຕາມ 5 ຫລັກການ 3 ທິດນຳ, ຕັດສິນໃຈປັບປຸງແກ້ໄຂ 3 ກະແສແນວຄິດທີ່ຍັງເກາະຫ້ອຍຢູ່ນຳສະມາຊິກພັກ, ພະນັກງານໃຫ້ໝົດໄປ, ຖືເອົາວຽກງານຕິດຕາມ, ກວດກາເປັນບັນຫາສຳຄັນ ແນໃສ່ກໍ່ສ້າງໜ່ວຍພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເນັ້ນຄຸນນະພາບຫລາຍກວ່າປະລິມານ, ເອົາໃຈໃສ່ປົກປັກຮັກສາມູນເຊື້ອເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕະຫລອດໄປ.

(ເອີນ ແກ້ວບຸນມີ)

# ລະນຶກວັນຊາດ 2 ທັນວາ ແລະ ວັນຄ້າຍວັນເກີດຂອງປະທານ ໄກສອນ ພົມວິຫານ



(ສພຊ) ໃນຕອນເຊົ້າ ຂອງວັນທີ 16 ທັນວາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດຕັ້ງພິທີປາຖະກະຖາຫວນຄືນມູນເຊື້ອວັນຊາດ 2 ທັນວາ ຄົບຮອບ 47 ປີ (2/12/1975-2/12/2022) ແລະ ວັນຄ້າຍວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13/12/1920-13/12/2022) ເຊິ່ງເປັນປະທານພິທີໂດຍທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ ພ້ອມທັງບັນດາຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານວິຊາການທັງໝົດພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ທ່ານ ນາງ ພູທອນ ແກ້ວພູວົງ ໄດ້ປາຖະກະຖາຍົກໃຫ້ເຫັນວ່າ: ກ່ອນວັນທີ 2 ທັນວາ 1975 ປະເທດຊາດບ້ານເມືອງຂອງພວກເຮົາ ຖືກຈັກກະພັດຕ່າງດ້າວທັງແບບເກົ່າ ແລະ ແບບໃໝ່ເຂົ້າມາຮຸກຮານ ປະຊາຊົນລາວບັນດາເຜົ່ານັບແຕ່ເໜືອເຖິງໃຕ້ກໍ່ໄດ້ຕໍ່ສູ້ຢ່າງອົງອາດກ້າຫານ ແຕ່ກໍບໍ່ໄດ້ຮັບໄຊຊະນະ ຍ້ອນບໍ່ມີພັກນຳພາ, ພາຍຫລັງພັກປະຊາຊົນປະຕິວັດລາວໄດ້ຮັບການສ້າງຕັ້ງຂຶ້ນ ໂດຍແມ່ນປະທານ ໄກສອນ ພົມວິຫານ ເປັນຜູ້ນຳພາປະຊາຊົນລາວບັນດາເຜົ່າຕໍ່ສູ້ຈົນໄດ້ຮັບໄຊຊະນະເປັນຂັ້ນໆມາ ແບບບົວບໍ່ຊ້ຳ ນ້ຳບໍ່ຂຸ່ນແຕ່ຈັບປາໄດ້ ແລະ ກໍໄດ້ສະຖາປະນາເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນວັນທີ 2 ທັນວາ 1975 ມາໃນປີນີ້ ກໍຄົບຮອບ 47 ປີພໍດີ; ໄຊຊະນະນັ້ນບໍ່ສະເພາະແຕ່ໄດ້ຟື້ນຟູຄວາມເປັນເອກະລາດຂອງປະເທດເຮົາ, ຫາກຍັງເປັນຄັ້ງທຳອິດ ທີ່ປະຊາຊົນລາວບັນດາເຜົ່າຜູ້ເຄີຍດຳລົງຊີວິດເປັນທາດ ໄດ້ກາຍມາເປັນເຈົ້າຂອງແທ້ຈິງຂອງຊາດໜຶ່ງ ທີ່ມີເອກະລາດ, ມີອິດສາລະພາບຢ່າງສົມບູນ ແລະ ພວມກ້າວຂຶ້ນສູ່ສັງຄົມນິຍົມ, ເຮັດໃຫ້ຄວາມມຸ້ງຫວັງອັນແຮງກ້າຂອງປວງຊົນລາວ ກໍຄືຂອງມວນມະນຸດປາກົດເປັນຈິງຢູ່ບົນຜືນແຜ່ນດິນອັນແສນຮັກຂອງພວກເຮົາ. ຄຽງຄູ່ກັນນີ້, ທ່ານຍັງໄດ້ຍົກໃຫ້ເຫັນເຖິງການນຳພາ-ຊີ້ນຳຂອງພັກໃນໄລຍະໃໝ່ ກໍຄືໄລຍະການສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງສີວິໄລ ແລະ ກ້າວໜ້າຂຶ້ນໄປເລື້ອຍໆ.

ພາຍຫລັງທີ່ໄດ້ຮັບຟັງການປາຖະກະຖາເອກະສານທີໜຶ່ງໄປແລ້ວນັ້ນ ທ່ານກໍໄດ້ສືບຕໍ່ປາຖະກະຖາເອກະສານທີສອງ ເຊິ່ງກ່ຽວພັນກັບຜູ້ນຳທີ່ແສນເຄົາລົບຮັກ ກໍຄືວັນຄ້າຍວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ ໃນນີ້, ທ່ານໄດ້ຍົກໃຫ້ເຫັນກ່ຽວກັບຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ໄກສອນ ພົມວິຫານ, ຜົນງານໃນການນຳພາ-ຊີ້ນຳພາລະກິດປະຕິວັດ ພ້ອມທັງຄຸນງາມຄວາມດີຂອງປະທານ ໄກສອນ ພົມວິຫານ ແລະ ກໍໄດ້ເນັ້ນໜັກເສີມຂະຫຍາຍ, ສືບທອດມໍລະດົກອັນລ້ຳຄ່າທີ່ເພິ່ນໄດ້ສ້າງໄວ້ ໃຫ້ເປັນມູນເຊື້ອປະຕິວັດ, ຄຸນທາດການເມືອງ, ຄຸນສົມບັດສິນທຳ, ແບບແຜນວິທີເຮັດວຽກ ແລະ ການດຳລົງຊີວິດຂອງປະທານ ໄກສອນ ພົມວິຫານ ໄດ້ເປັນແວ່ນແຍງອັນໃສແຈ້ງໃຫ້ພະນັກງານ, ສຳມະຊິກພັກ ແລະ ພົນລະເມືອງລາວທຸກຊັ້ນຄົນ.

# ທາບທາມຄຳເຫັນຕໍ່ຮ່າງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ກອງທຶນໄພພິບັດຂັ້ນແຂວງ

(ສພຊ) ວັນທີ 25 ພະຈິກ 2022 ຢູ່ທີ່ຫ້ອງສະໂມສອນເມືອງເງິນ ແຂວງໄຊຍະບູລີ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ກອງທຶນໄພພິບັດຂັ້ນແຂວງ; ເຂົ້າຮ່ວມມີທ່ານ ນາງ ສີຈິມ ບຸນມານະທຳ ຮອງເລຂາພັກເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເມືອງເງິນ ແຂວງໄຊຍະບູລີ, ທ່ານ ໜູເກນ ພົນລັກ ວ່າການຫົວໜ້າພະແນກແຮງງານ ແລະ ສະຫວັດດີສັງຄົມແຂວງ ພ້ອມດ້ວຍທີມງານ, ມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າຮອງຫົວໜ້າຫ້ອງການ, ອຳນວຍໂຮງຮຽນ, ລັດວິສາຫະກິດ, ວິຊາການທີ່ເຮັດວຽກງານຄຸ້ມຄອງໄພພິບັດຂັ້ນເມືອງ ຕະຫລອດຮອດນາຍບ້ານຕ່າງໆໃນທົ່ວເມືອງເຂົ້າຮ່ວມ.




ກອງປະຊຸມ, ທ່ານ ໂກສິດ ສິງສະຖິດ ຫົວໜ້າຂະແໜງກົດໝາຍ ພະແນກຍຸຕິທຳແຂວງ ໄດ້ຂຶ້ນຜ່ານຮ່າງບົດສະເໜີຄວາມຈຳເປັນການສ້າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໄພພິບັດຂັ້ນແຂວງ; ຈາກນັ້ນ, ທ່ານ ເມກ ເກດຕາໄຊ ຮອງຫົວໜ້າພະແນກການຕ່າງປະເທດແຂວງ ໄດ້ຂຶ້ນຜ່ານຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ກອງທຶນໄພພິບັດແຂວງ ເຊິ່ງມີ 9 ໝວດ ແລະ 36 ມາດຕາ.

ໃນວາລະກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຂຶ້ນປະກອບຄຳຄິດຄຳເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ກອງທຶນໄພພິບັດແຂວງ ເຊິ່ງຂໍ້ຕົກລົງສະບັບນີ້ໄດ້ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ກອງທຶນໄພພິບັດແຂວງ ເພື່ອເປັນການປຸກລະດົມທຶນຈາກບຸກຄົນ, ນິຕິບຸກຄົນ, ຄອບຄົວອົງການຈັດຕັ້ງພາກລັດ ແລະ ອົງການຈັດຕັ້ງສາກົນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ໄດ້ປະກອບສ່ວນ ເປັນເງິນ ແລະ ວັດຖຸເຂົ້າໃນກອງທຶນສະສົມ ແນໃສ່ເຮັດໃຫ້ກອງທຶນດັ່ງກ່າວມີຄວາມເຂັ້ມແຂງ ແລະ ຍືນຍົງ, ເພື່ອເປັນການຕອບໂຕ້ໄພພິບັດສຸກເສີນ ໃຫ້ທັນກັບເວລາ ແລະ ທົ່ວເຖິງ.

(ສຸລິຍາ ແສງເດືອນ)

# ສພຂ ຜົ້ງສາລີ ສຳເລັດການລົງນາມເຊັນບົດບັນທຶກຮ່ວມກັບບັນດາພະແນກການທີ່ກ່ຽວຂ້ອງ

ທ່ານ ສົມຈິດ ທັບລະກອນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ ທັງເປັນຮອງປະທານສະພາປະຊົນແຂວງ (ສພຂ) ຜົ້ງສາລີ ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ນະຄອນຫລວງວຽງຈັນ ທ່ານໄດ້ໃຫ້ສຳພາດຕໍ່ສື່ມວນຊົນວ່າ: ພາຍຫລັງທີ່ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 2 ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລ້ວ, ຄະນະປະຈຳ ສພຂ ໄດ້ດຳເນີນກອງປະຊຸມຮ່ວມກັບບັນດາຄະນະກຳມະການ, ຄະນະເລຂາທິການ ສພຂ ເພື່ອກວດກາບັນດາເນື້ອໃນວຽກງານຮອບດ້ານທີ່ຢູ່ໃນຄວາມຮັບຜິດຊອບຂອງ ສພຂ ແລະ ໄດ້ຈັດກອງປະຊຸມຮ່ວມກັບອົງການປົກຄອງແຂວງ ເພື່ອປຶກສາຫາລື, ເປັນເອກະພາບຕໍ່ກັບບັນດາເນື້ອໃນ, ບົດລາຍງານຕ່າງໆຂອງອົງການປົກຄອງແຂວງ, ທີ່ຈະນຳສະເໜີເພື່ອຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ລວມມີ 15 ເນື້ອໃນ; ນອກຈາກນັ້ນ, ຄະນະປະຈຳ ສພຂ ໄດ້ຊີ້ນຳບັນດາຄະນະກຳມະການຄົ້ນຄວ້າສ້າງເປັນຄຳຊັກຖາມກ່ຽວກັບບັນຫາທີ່ພົ້ນເດັ່ນ, ເຄັ່ງຮ້ອນທີ່ເກີດຂຶ້ນໃນສັງຄົມເພື່ອສະເໜີໃຫ້ອົງການປົກຄອງແຂວງ, ບັນດາພະແນກການກ່ຽວຂ້ອງ ເພື່ອມາຊີ້ແຈງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ລວມມີ 15 ພາກສ່ວນ ເຊິ່ງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ໄດ້ຄົ້ນຄວ້າພິຈາລະນາຮັບຮອງເອົາວຽກງານທີ່ສຳຄັນຂອງອົງການປົກຄອງ ລວມມີ ຈຳນວນ 10 ສະບັບ ໃນນີ້, ວຽກງານບຸກຄະລາກອນກ່ຽວກັບແຕ່ງຕັ້ງ ແລະ ຍົກຍ້າຍສະມາຊິກອົງການປົກຄອງແຂວງ ຈຳນວນ 2 ທ່ານ; ການສ້າງ ແລະ ປັບປຸງຕິກຳໃຕ້ກົດໝາຍ (ຂໍ້ຕົກລົງທ່ານເຈົ້າແຂວງ) ຈຳນວນ 4 ສະບັບ.

ພິເສດ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ, ຄະນະກຳມະການ ແລະ ຄະນະເລຂາທິການ ສພຂ ຍັງໄດ້ລົງນາມເຊັນບົດບັນທຶກຮ່ວມວ່າດ້ວຍການພົວພັນປະສານງານ ກັບບັນດາພະແນກການທີ່ກ່ຽວຂ້ອງຈຳນວນ 24 ສະບັບ.

ນອກຈາກນັ້ນ, ຄະນະປະຈຳ ສພຂ ກໍໄດ້ເປັນເຈົ້າການໃນການພົວພັນປະສານສົມທົບກັບອົງການປົກຄອງແຂວງ ແລະ ດຳເນີນກອງປະຊຸມຄະນະປະຈຳ ສພຂ ເພື່ອຄົ້ນຄວ້າປຶກສາຫາລື ແລະ ພິຈາລະນາຮັບຮອງເອົາບັນຫາຕ່າງໆຂອງອົງການປົກຄອງແຂວງ ແລະ ວຽກງານຂອງ ສພຂ ລວມມີ 4 ຄັ້ງ, ມີ 16 ເນື້ອໃນ, ອອກເປັນມະຕິກອງປະຊຸມຄະນະປະຈຳ 6 ສະບັບ ແລະ ໄດ້ຊີ້ນຳໃຫ້ບັນດາຄະນະກຳມະການ, ຄະນະເລຂາທິການ ສພຂ ປະສານສົມທົບກັບອົງການປົກຄອງແຂວງ, ອົງການໄອຍະການ ແລະ ສານປະຊາຊົນແຂວງ ໃນການຕິດຕາມກວດກາ ແລະ ຊຸກຍູ້ ຕາມ 3 ພາລະບົດບາດຂອງ ສພຂ ສາມາດໄດ້ຮັບຜົນສຳເລັດ ຄື:



ສສຊ ປະຈຳເຂດເລືອກຕັ້ງທີ 2 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ເປັນເຈົ້າການເຂົ້າຮ່ວມຄົ້ນຄວ້າປະກອບຄຳຄິດເຫັນໃສ່ຮ່າງການສ້າງ ແລະ ປັບປຸງກົດໝາຍ ທີ່ສະພາແຫ່ງຊາດຈັດຂຶ້ນ ແລະ ສົ່ງໃຫ້ ຈຳນວນ 12 ສະບັບ ທີ່ຈະໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ; ນອກຈາກນັ້ນ, ຄະນະປະຈຳ ສພຂ ກໍໄດ້ຊີ້ນຳໃຫ້ຄະນະກຳມະການ ເປັນເຈົ້າການປະສານສົມທົບ ແລະ ຊຸກຍູ້ ໃຫ້ອົງການປົກຄອງແຂວງໃນການຄົ້ນຄວ້າສ້າງຮ່າງນິຕິກຳໃຕ້ກົດໝາຍ ຈຳນວນ 1 ສະບັບ ຄື: ຂໍ້ຕົກລົງທ່ານເຈົ້າແຂວງ ວ່າດ້ວຍການການຄຸ້ມຄອງການປຸກສ້າງ, ເຂດສະຫງວນ ແລະ ການຄຸ້ມຄອງຊັບສົມບັດຂອງຂະແໜງໂຍທາທິການ ແລະ ຂົນສົ່ງທົ່ວແຂວງ ເພື່ອທີ່ຈະພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ.

ທ່ານ ສົມຈິດ ທັບລະກອນ ໃຫ້ຮູ້ຕື່ມວ່າ: ອັນພົ້ນເດັ່ນ ຄະນະ ສສຊ ແລະ ສສຂ ໄດ້ເຄື່ອນໄຫວຈັດຕັ້ງປະຕິບັດທົດລອງຕົວຈິງແມ່ນການນຳໃຊ້ຮ່າງປຶ້ມຄູ່ມື 2 ສະບັບຂອງສະພາແຫ່ງຊາດ ຄື: ຄູ່ມືການລົງພົບປະປະຊາຊົນ ແລະ ຄູ່ມືການພິຈາລະນາ ແລະ ແກ້ໄຂສາຍດ່ວນ ໂດຍໄດ້ຈັດຕັ້ງປະຕິບັດທົດລອງຕົວຈິງຢູ່ 7 ເມືອງຄື: ເມືອງຜົ້ງສາລີ, ເມືອງບຸນເໜືອ, ເມືອງຍອດອູ, ເມືອງບຸນໃຕ້, ເມືອງຂວາ, ເມືອງໃໝ່ ແລະ ເມືອງສຳພັນ ເຊິ່ງສາມາດຈັດຕັ້ງປະຕິບັດໄດ້ທັງໝົດລວມມີ 33 ຈຸດ, 37 ບ້ານ ໃນທົ່ວແຂວງ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 3.697 ຄົນ ຍິງ 1.753 ຄົນ.

ນອກນັ້ນ, ຄະນະປະຈຳ ສພຂ ໄດ້ເປັນເຈົ້າການຄົ້ນຄວ້າພິຈາລະນາຮັບຮອງເອົາບັນຫາທີ່ສຳຄັນ ແລະ ຈຳເປັນຕາມການສະເໜີຂອງອົງການປົກຄອງແຂວງ ແລະ ອອກເປັນມະຕິກອງປະຊຸມຄະນະປະຈຳ ສພຂ ຄື: ມະຕິວ່າດ້ວຍການຮັບຮອງເອົາການສະເໜີແຕ່ງຕັ້ງຜູ້ພິພາກສານຂັ້ນ I ຂອງສານປະຊາຊົນແຂວງ ຈຳນວນ 2 ທ່ານ ແລ້ວສະເໜີຫາປະທານສານປະຊາຊົນສູງສຸດ ເພື່ອຄົ້ນຄວ້າແຕ່ງຕັ້ງຕາມລະບຽບການ; ຄົ້ນຄວ້າພິຈາລະນາຍົກຍ້າຍພະນັກງານພາຍໃນ ສພຂ ໄປຢູ່ຂະແໜງການອື່ນ ຈຳນວນ 2 ທ່ານ ຍິງ 2 ທ່ານ ແລະ ຄົ້ນຄວ້າແຕ່ງຕັ້ງພະນັກງານບໍລິຫານຂັ້ນຮອງເລຂາທິການ ສພຂ ແລະ ຕຳແໜ່ງບໍລິຫານ ປະເພດ 4, ປະເພດ 5 ຈຳນວນ 6 ທ່ານ ຍິງ 2 ທ່ານ. ພ້ອມດຽວກັນນີ້, ຍັງໄດ້ສົ່ງພະນັກງານ-ລັດຖະກອນພາຍໃນ ສພຂ ແລະ ພະນັກງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເມືອງ ໄປບຳລຸງພາສາຫວຽດນາມ ທີ່ແຂວງເຊີນລາ ແຫ່ງ ສສ.ຫວຽດນາມ ຈຳນວນ 6 ທ່ານ ຍິງ 2 ທ່ານ ໃນນີ້, ໄລຍະສັ້ນ 3 ເດືອນ ຈຳນວນ 1 ທ່ານ, ໄລຍະສັ້ນ 9 ເດືອນ ຈຳນວນ 5 ທ່ານ ຍິງ 2 ທ່ານ (ພະນັກງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເມືອງບຸນເໜືອ 1 ທ່ານ ແລະ ເມືອງສຳພັນ 1 ທ່ານ).

ຄະນະປະຈຳ ສພຂ ຖືເອົາວຽກງານການຕິດຕາມກວດກາເປັນວຽກງານສຳຄັນໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ແລະກໍໄດ້ຊີ້ນຳຄະນະກຳມະການໃນການການເຂົ້າຮ່ວມແຕ່ຫົວທີຮ່ວມກັບອົງການປົກຄອງແຂວງ ເພື່ອຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ່າງໆຂອງແຂວງ ສະແດງອອກ ຄື:

ໄດ້ເຂົ້າຮ່ວມເຄື່ອນໄຫວນຳຄະນະທີມງານສະພາແຫ່ງຊາດ (ປະທານກຳມາທິການແຜນການ, ການເງິນ ແລະ ກວດສອບ) ທີ່ໄດ້ລົງເຄື່ອນໄຫວຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານປະຈຳ 6 ເດືອນທ້າຍປີ 2022 ແລະ ລົງຕິດຕາມກວດກາໂຄງການກໍ່ສ້າງຂົວຂ້າມນ້ຳອູ ທີ່ເມືອງສຳພັນ; ເຂົ້າຮ່ວມເຄື່ອນໄຫວນຳທີມງານຂອງທ່ານຮອງປະທານສະພາແຫ່ງຊາດ ກ່ຽວກັບຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 4 ທີ່ເມືອງຂວາ; ຕິດຕາມກວດກາ ແລະ ຊຸກຍູ້ການສ້າງວິຊາອາຊີບ, ການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳຂອງປະຊາຊົນເພື່ອແກ້ໄຂໄພວ່າງງານ ແລະ ການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ; ຈັດຕັ້ງກອງປະຊຸມເພື່ອປະເມີນຜົນຂອງການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຍຸຕິທຳ ຈຳນວນ 4 ສະບັບຄື: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ນອກຈາກນັ້ນ, ຍັງໄດ້ຊີ້ນຳບັນດາຄະນະກຳມະການໃນການຄົ້ນຄວ້າພິຈາລະນາ ແລະ ແກ້ໄຂບັນດາຄຳສະເໜີຜ່ານໂທລະສັບສາຍດ່ວນ ໃນວະລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 3 ເລື່ອງ ແລະ ຜ່ານໂທລະສັບສາຍດ່ວນໃນວະລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຈຳນວນ 8 ເລື່ອງ; ຕ້ອນຮັບປະຊາຊົນທີ່ເຂົ້າມາພົວພັນໃຫ້ຄຳແນະນຳ ຕໍ່ກັບຄຳຮ້ອງທຸກ ຈຳນວນ 3 ຄັ້ງ, ມີຈຳນວນ 4 ເທື່ອຄົນ; ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນແຂວງ ຈຳນວນ 14 ເລື່ອງ ແລະ ໄດ້ຄົ້ນຄວ້າພ້ອມທັງສະໂໜດນຳສົ່ງໃຫ້ອົງການປົກຄອງແຂວງ, ພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າແກ້ໄຂ ຈຳນວນ 10 ເລື່ອງ ແລະ ແຈ້ງຕອບໃຫ້ຜູ້ກ່ຽວຮັບຊາບ ຈຳນວນ 4 ເລື່ອງ.

ສຳລັບວຽກງານການຕ່າງປະເທດ ສຳເລັດການເຊັນບົດບັນທຶກຊ່ວຍຈຳໄມຕີຈິດລະຫວ່າງຄົນະປະຈຳ ສພຂ ຜົ້ງສາລີ ແຫ່ງ ສປປລາວ ກັບຄະນະກຳມະການປະຈຳສະພາຜູ້ແທນປະຊາຊົນແຂວງແຂວງຢຸນນານ ແຫ່ງ ສປຈີນ ທັງນີ້, ກໍເພື່ອຮັດແໜ້ນ ແລະ ພັດທະນາສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ສປປລາວ ແລະ ສປ.ຈີນ ໃຫ້ກ້າວຂຶ້ນອີກບາດກ້າວໜຶ່ງ, ຊຸກຍູ້ການແລກປ່ຽນການຮ່ວມມື ລະຫວ່າງອົງການນິຕິບັນຍັດທ້ອງຖິ່ນຂອງສອງຝ່າຍ, ຈັດຕັ້ງປະຕິບັດແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊະຕາກຳລາວ-ຈີນ, ຄະນະປະຈຳ ສພຂ ຜົ້ງສາລີ ແຫ່ງ ສປປລາວ ແລະ ຄະນະກຳມະການປະຈຳສະພາຜູ້ແທນປະຊາຊົນ ແຂວງຢຸນນານ ແຫ່ງ ສປຈີນ ໄດ້ຕົກລົງເປັນເອກະພາບກັນ ກ່ຽວກັບການສ້າງສາຍພົວພັນຮ່ວມມືໄມຕີຈິດ ທັງພ້ອມກັນລົງນາມໃນບົດບັນທຶກຊ່ວຍຈຳສະບັບນີ້.

ໂອກາດດັ່ງກ່າວ, ທ່ານ ສົມຈິດ ທັບລະກອນ ຍັງໄດ້ໃຫ້ສຳພາດກ່ຽວກັບການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ການຕິດຕາມກວດກາ ທີ່ເຫັນໄດ້ບັນຫາຕ່າງໆທີ່ປະຊາຊົນສະເໜີຫລາຍ ແລະ ມີບັນຫາຕ່າງໆທີ່ເປັນບັນຫາຄົງຄ້າງທີ່ຍັງບໍ່ສາມາດແກ້ໄຂໄດ້ ເຊິ່ງທ່ານໃຫ້ຮູວ່າ: ຄະນະປະຈຳ ສພຂ ໄດ້ຊີ້ນຳບັນດາຄະນະກຳມະການ ແລະ ຄະນະເລຂາທິການ ສພຂ ໃນການປັບປຸງບັນດາເນື້ອໃນມະຕິທີ່ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3, ຄົ້ນຄວ້າອອກຄຳແນະນຳ, ແຜນການດຳເນີນງານການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ບັນດາເມືອງ ແລະ ບ້ານເປົ້າໝາຍ ໂດຍແບ່ງອອກເປັນ 2 ຂັ້ນຄື: ຂັ້ນແຂວງມີບັນດາພະແນກການ, ອົງການລັດທຽບເທົ່າ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ກອງບັນຊາການທະຫານແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ໂດຍແມ່ນປະທານ, ຮອງປະທານຄະນະປະຈຳ ສພຂ ເປັນຜູ້ຮັບຜິດຊອບລົງເຄື່ອນໄຫວ ລວມມີ 4 ຈຸດ, ມີຜູ້ເຂົ້າຮ່ວມ ຈຳນວນ 471 ຄົນ ຍິງ 136 ຄົນ ແລະ ຢູ່ຂັ້ນເມືອງມີບັນດາຫ້ອງການຂັ້ນເມືອງ, ບ້ານ ແລະ ກຸ່ມບ້ານ ໂດຍແມ່ນບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 2 ແລະ ສສຂ ລວມມີ 100 ຈຸດ ຄື: ມີ 7 ຈຸດເທສະບານຂອງເມືອງ, ມີ 21 ກຸ່ມບ້ານ, ມີ 88 ບ້ານ, ມີຜູ້ເຂົ້າຮ່ວມ 10.350 ຄົນ ຍິງ 4.551 ຄົນ.




ຜ່ານການເຄື່ອນໄຫວພົບປະ ແລະ ຈັດຕັ້ງຜັນຂະຫຍາຍຜົນເນື້ອໃນສຳເລັດກອງປະຊຸມດັ່ງກ່າວ ສາມາດເຮັດໃຫ້ພະນັກງານການນຳແຂວງ, ເມືອງ,ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ພະນັກງານບຳນານ, ແພດໝໍ, ຄູອາຈານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ, ມີຄວາມຮັບຮູ້, ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ-ລັດ ເປັນຕົ້ນແມ່ນເຫັນແຈ້ງຕໍ່ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຄວາມພະຍາຍາມສູ້ຊົນຂອງພັກ, ລັດຖະບານ, ຄະນະພັກ, ອົງການປົກຄອງແຂວງ ແລະ ທິດທາງແຜນການ ແລະ ວຽກຈຸດສຸມຂອງພັກ-ລັດ ແລະ ອົງການປົກຄອງ ແລະ ວຽກງານອື່ນໆ; ສສຊ ແລະ ສສຂ ໄດ້ປະຕິບັດສິດ-ໜ້າທີ່ຂອງຕົນ ຢ່າງເຕັມສ່ວນ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ແນໃສ່ເຮັດໃຫ້ປະຊາຊົນບັນດາເຜົ່າມີຄວາມຮັບຮູ້ ເຂົ້າໃຈ ຕໍ່ພາລະບົດບາດຂອບເຂດສິດ, ໜ້າທີ່ຂອງອົງການນິຕິບັດຍັດ ໄດ້ຫລາຍຂຶ້ນ; ເປັນການປຸກລະດົມໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມແນວທາງນະໂຍບາຍອັນຖືກຕ້ອງຂອງພັກ-ລັດ, ຮັບຮູ້ ແລະ ເຂົ້າໃຈແຈ້ງ ຕໍ່ສິດ ແລະ ພັນທະຂອງພົນລະເມືອງ ຕາມລັດຖະທຳມະນູນໄດ້ກຳນົດ; ໄດ້ຮັບຟັງການປະກອບຄວາມເຫັນ, ຂໍ້ຂ້ອງໃຈ ແລະ ຄວາມມຸ້ງມາດປາຖະໜາຂອງຜູ້ມີສິດເລືອກຕັ້ງທີ່ສະເໜີໃຫ້ພັກ-ລັດຖະບານ, ອົງການປົກຄອງແຂວງ ນຳໄປຄົ້ນຄວ້າ ແລະ ປັບປຸງແກ້ໄຂເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບປະສິດທິພາບ, ປະສິດທິຜົນ ແລະ ນຳຜົນປະໂຫຍລວມສູງສຸດມາໃຫ້ປະຊາຊົນຢ່າງແທ້ຈິງ ລວມມີ 394 ຂໍ້ສະເໜີ ໃນນີ້, ພົວພັນເຖິງຂັ້ນສູນກາງ ຈຳນວນ 7 ຂໍ້; ພົວພັນເຖິງຂັ້ນແຂວງ 100 ຂໍ້ ແລະ ພົວພັນເຖິງຂັ້ນເມືອງ 287 ຂໍ້ ເຊິ່ງບັນດາຄຳສະເໜີດັ່ງກ່າວສ່ວນຫລາຍແມ່ນໄດ້ສະເໜີໃຫ້ລັດຖະບານ, ອົງການປົກຄອງແຂວງ ແລະ ເມືອງ ເປັນເຈົ້າການໃນການຄຸ້ມຄອງລາຄາສິນຄ້າທີ່ເພີ່ມຂຶ້ນ, ການກໍ່ສ້າງ ແລະ ສ້ອມແປງເສັ້ນທາງເຂົ້າຫາບ້ານ, ທາງເຂົ້າຫາເຂດຜະລິດ ທີ່ໄດ້ຮັບຜົນກະທົບການໄພນ້ຳຖ້ວມ, ດິນເຈື່ອນ ແລະ ວຽກງານການປັບປຸງຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ, ການຈັດສັນອາຊີບຄົງທີ່, ການທຳການຜະລິດ ແລະ ອື່ນໆ ຈາກບັນດາຄຳສະເໜີດັ່ງກ່າວ, ຄະນະປະຈຳ ສພຂ ກໍໄດ້ສະໂໜດນຳສົ່ງ ໃຫ້ສະພາແຫ່ງຊາດ ເພື່ອສະເໜີໃຫ້ລັດຖະບານ, ກະຊວງການກ່ຽວຂ້ອງ ແລະ ໃຫ້ອົງການປົກຄອງແຂວງ ຄົ້ນຄວ້າແກ້ໄຂ ຕາມຂັ້ນຕອນຂອງລະບຽບການ.

ສຳລັບບັນຫາຄົງຄ້າງ ແລະ ຂໍ້ຫຍຸ້ງຍາກທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ ເຊິ່ງໄລຍະຜ່ານມາເຖິງວ່າ ສພຂ ເອົາໃຈໃສ່ ແລະ ຊຸກຍູ້ອົງການປົກຄອງແຂວງເປັນເຈົ້າການໃນການຄົ້ນຄວ້າສ້າງນິຕິກຳໃຕ້ກົດໝາຍ ແຕ່ຍັງມີຫລາຍພະແນກການຍັງບໍ່ທັນເຂົ້າໃຈຂອດການສ້າງນິຕິກຳໃຕ້ກົດໝາຍ ເປັນຕົ້ນແມ່ນກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ; ການຄົ້ນຄວ້າ ພິຈາລະນາຮັບຮອງເອົາບັນສຳຄັນຂອງທ້ອງຖິ່ນ ຜ່ານກອງປະຊຸມ ສພຂ ເຫັນວ່າຍັງບໍ່ທັນເຕັມສ່ວນ, ຄະນະປະຈຳມີການຮັບຮອງໄປແລ້ວແຕ່ຜົນການຈັດຕັ້ງປະຕິບັດຍັງມີການສະເໜີປັບປຸງແກ້ໄຂ, ເຊິ່ງສະແດງການການກະກຽມບັນດາເນື້ອໃນບໍ່ທັນລະອຽດ ຂໍ້ມູນຈຳນວນໜຶ່ງບໍ່ທັນຊັດເຈນ, ການສະໜອງຂໍ້ມູນຂອງອົງການປົກຄອງແຂວງ ເພື່ອນຳເຂົ້າໃນກອງປະຊຸມຍັງຊັກຊ້າ; ກົນໄກການປະສານງານ ກັບພາກສ່ວນຕ່າງໆ ຍັງບໍ່ທັນກົມກຽວ, ເຮັດໃຫ້ການພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງຈຳນວນໜຶ່ງປະສິດທິພາບບໍ່ທັນສູງເທົ່າທີ່ຄວນ; ການປະຕິບັດສິດ ແລະ ໜ້າທີ່ຕິດຕາມກວດກາຂອງ ສພຂ ຕໍ່ກັບພາກສ່ວນທີ່ກ່ຽວຂ້ອງ ໃນການເຄົາລົບ, ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມ ສພຂ ເຫັນວ່າ ຍັງບໍ່ທັນເຂົ້າສູ່ລວງເລິກ; ການຈັດຕັ້ງຜັນຂະຫຍາຍເນື້ອໃນຜົນສຳເລັດກອງປະຊຸມ ແລະ ການເຕົ້າໂຮມພະນັກງານ-ລັດຖະກອນ ແລະ ພໍ່ແມ່ນປະຊາຊົນຢູ່ບາງຈຸດ ຍັງຊັກຊ້າ, ເຂົ້າຮ່ວມບໍ່ຄົບຖ້ວນ ແລະ ຄວາມຕື່ນຕົວເຂົ້າຮ່ວມ ກໍບໍ່ທັນສູງເທົ່າທີ່ຄວນ. ນອກຈາກນີ້, ບາງບຸກຄົນພຽງແຕ່ມາເຂົ້າຮ່ວມເປັນຮູບການເທົ່ານັ້ນ ໂດຍບໍ່ຕັ້ງໃຈຮັບຟັງບັນດາເນື້ອໃນຂອງການຜັນຂະຫຍາຍ; ອົງການປົກຄອງແຂວງ, ບັນດາພະແນກການບາງຂະແໜງ ຍັງບໍ່ທັນເປັນເຈົ້າການໃນການຄົ້ນຄວ້າ, ຊອກມາດຕະການ, ວິທີການຈັດຕັ້ງປະຕິບັດ ແລະ ແກ້ໄຂບັນດາຂໍສະເໜີຂອງປະຊາຊົນ ທີ່ສະເໜີຜ່ານ ສພຂ ຍັງບໍ່ທັນຖືກຕ້ອງ, ສອດຄ່ອງກັບຈຸດປະສົງຂອງການສະເໜີ ແລະ ບໍ່ທັນກັບໄລຍະເວລາ ຕາມລະບຽບກົດໝາຍເທື່ອ.




# ຄວາມລະອາຍແກ່ໃຈ... ຢ້ານບາບ

ໂດຍ: ດົ້ນກົບເມກ



ຄົນດຽວນີ້ຈຳນວນໜຶ່ງເຮັດຫຍັງລົງໄປບໍ່ມີຄວາມລະອາຍແກ່ໃຈ ແລະ ບໍ່ຢ້ານບາບ, ພະພຸດທະເຈົ້າ ສາສະດາຂອງສາສະໜາພຸດ ສອນຫລັກທຳມະ 2 ປະການ ເພື່ອເປັນບ່ອນອີງໃນການຄຸ້ມຄອງສັງຄົມໂລກໃຫ້ຢູ່ກັນຢ່າງສະຫງົບສຸກ-ໄວ້ໃຈກັນ ເຊື່ອຖື ແລະ ເຄົາລົບກັນ ຄື: ຫິຣິ ແລະ ໂອດຕັບປະ.

1. ຫິຣິ ແປວ່າ: ຄວາມລະອາຍແກ່ໃຈ, ຄວາມລະອາຍຕໍ່ບາບ ເຊິ່ງມີຄວາມໝາຍເລິກວ່າ: ຄົນຕ້ອງລະອາຍຕໍ່ບາບທີ່ຕົນເຮັດ, ປະພຶດຜິດລະບຽບ, ສຸດຈະລຶດຫລອກລວງທັງຄຳເວົ້າ ແລະ ການກະທຳຫລັກທຳມະ ຄື ຫິຣິ ນີ້ ເປັນຄຸນນະທຳປ້ອງກັນບໍ່ໃຫ້ຄົນປະພຶດຊົ່ວ ເພາະສອນໃຫ້ມີຈິດໃຈຮູ້ສຶກລະອາຍຕໍ່ບາບ-ຕໍ່ການກະທຳສໍ້ໂກງ ເວົ້າຕົວະຫລອກລວງ ມັນຈຶ່ງເປັນຫລັກຄຸນນະທຳໃຫ້ຄົນເຮົາຢູ່ຮ່ວມກັນຢ່າງສະຫງົບສຸກ.

2. ໂອດຕັບປະ ແປວ່າ: ຄວາມຢ້ານກົວຕໍ່ຜົນຂອງຄວາມຊົ່ວ (ບາບ) ທີ່ຕົນໄດ້ເຮັດແລ້ວ ຖ້າວ່າຄົນໃດມີຈິດໃຈຮູ້ສຶກລະອາຍ ຢ້ານຕໍ່ຜົນຂອງບາບກຳທີ່ຕົນປະພຶດ ຫລື ຈະເຮັດຜິດແລ້ວ ຍັງຮູ້ຜົນບາບຂອງບາບກຳທີ່ຈະຕາມມາ ເຮັດໃຫ້ເດືອດຮ້ອນ, ຖືກສັງຄົມຕຳນິຕິຕຽນ, ໂອດຕັບປະ ເປັນອາການຂອງຈິດໃຈທີ່ເປັນຄຸນນະທຳ ເຊິ່ງທຸກຄົນຄວນລະນຶກມີໄວ້ໃນແນວຄິດຈິດໃຈ ບໍ່ດັ່ງນັ້ນ ກໍຈະບໍ່ຢ້ານບາບກຳ-ໃຊ້ຄຳເວົ້າຕົວະລວງຄົນອື່ນ ເຮັດແນວນີ້ ຈຶ່ງເປັນສິ່ງທີ່ລະອາຍແກ່ໃຈຕໍ່ບາບກຳ ຫລັກທຳມະ 2 ຂໍ້ນີ້ ເຖິງແມ່ນວ່າມັນສັ້ນ ແຕ່ກໍມີຄວາມໝາຍກວ້າງຂວາງເລິກເຊິ່ງ ສອນໃຫ້ຄົນເຮົາມີສະຕິລະນຶກໄດ້ ຮູ້ຈັກບາບ-ບຸນ ເພາະຄຳວ່າ ຫິຣິ ໝາຍເຖິງຄວາມລະອາຍໃຈຕໍ່ການເຮັດບາບ ແລະ ໂອດຕັບປະຄື: ຢ້ານກົວຕໍ່ຜົນຂອງການປະພຶດຊົ່ວຈະຕາມມາ ຖ້າວ່າຄົນໃດຫາກຢ້ານ-ຮູ້ສຶກລະອາຍແກ່ໃຈ ກໍສະແດງວ່າຜູ້ນັ້ນມີຄຸນນະທຳ 2 ປະການນີ້, ສັງຄົມຈະສະຫງົບສຸກ ແລະ ປາສະຈາກການນິນທາຕຳນິຕິຕຽນໄດ້ ຖ້າວ່າຮູ້ຈັກທຳມະ 2 ຂໍ້ນີ້.




\# ສາວຈົ້ມ

## (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຖິງພິທີການ)

*✳ **ກອງ**ປະຊຸມສະໄໝສາມັນ**ເທື່ອທີ 4** ຂອງສະພາແຫ່ງຊາດ **ຊຸດທີ IX** ພວມຄຶກຄື້ນ ເພາະເປັນຊ່ວງວາລະຂອງກົດໝາຍ **ສສຊ** ຫລາຍທ່ານໄດ້ **ປະກອບຄວາມຄິດເຫັນ** ນຳປະເດັນທີ່ສັງຄົມ ສ່ອງແສງມາຫລາຍດ້ານ ການປະຕິບັດທັງນຳໃຊ້ ບັນດາກົດໝາຍເພື່ອປັບປຸງ ໃຫ້ຮັດກຸມກວ່າກ່ອນກໍ ດີຂຶ້ນກວ່າເດີມ **ນັ້ນແລ້ວ!***

*✳ **ຊຽງຂວາງເກມ**ເປີດແລ້ວ ໄຂຂຶ້ນເປັນທາງການ ຫລາຍທ່ານຢາມເຢືອນຊົມ ເຂດແດນດິນພົ້ນ ທົ່ງໄຫຫີນຜືນກວ້າງ ຊົມຄ່າຄົນຊ່າ ໂລກາລືສະນັ່ນກ້ອງ ຄົນເຂົ້າກ່າວຂານ ມະຫະກຳກິລາແຫ່ງຊາດ ຈັດເຂດດ່ານແດນໜາວ ຊາວລາວຊົມທັງເຊຍ ມ່ວນມັນບັນກ້ອງ ເທັນ ບາງຜ່ອງໂຈມຜ້າ ຜືນໜາບົ່ງຫົ່ມ ຊົມກິລາເຂດແຄວ້ນ ແດນເບື້ອງບ່າວຊຽງ **ຄັກເດ.***

*✳ **ເນື່ອງ**ໃນໂອກາດຄົບຮອບ **10 ປີບໍລິສັດ 108 Jobs** ຈັດງານ ໄດ້ສຳຫລວດເກັບຂໍ້ມູນນັກນັກຮຽນ **1.026 ຄົນ** ໃນຊັ້ນ **ມ4 ແລະ ມ7 ຈາກ 6 ໂຮງຮຽນ**ຢູ່ນະຄອນຫລວງວຽງຈັນ ພົບການສຳຫລວດນັ້ນພົບວ່າ ອາຊີບໃນຝັນຂອງເຂົາເຈົ້າແມ່ນ **ແພດ-ໝໍ** ເພາະສະນັ້ນວິຊາທີ່ເຂົາເຈົ້າມັກຮຽນ ແລະຂະຫຍັນຫລາຍກວ່າໝູ່ແມ່ນ **ພາສາອັງກິດ** ເພາະຄິດວ່າຕິດພັນກັບຄວາມຝັນ ແລະ ອາຊີບດັ່ງກ່າວ ໃນຊ່ວຽງບອກແຈ້ງ ຖະແຫລງກ່າວຊານໄຂ ວ່າປະເທດທີ່ຢາກໄປ ແມ່ນ**ອາເມລິກາ**ພຸ້ນ ຄັນຫາກຈົບ ມ7 ຊັ້ນ ຄວາມຝັນຢາກສຶກສາຕໍ່ **ສປຈີນ** ຄິດໄດ້ ຢາກໄປຄົ້ນແມ່ນຮໍ່າຮຽນ **ຊັ້ນໃດ!***




## ທົ່ງໄຫຫີນ

\# ໂດຍ: ຫງວຽນ ກວາງ ຫງວ

ບົດກະວີຈາກນັກຂຽນ ສສ. ຫວຽດນາມເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນທາງການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ລາວ-ຫວຽດນາມ ຄົບຮອບ 45 ປີ

✳ ອັດສະຈັນບ່ອນເບື້ອງ
ເໝືອນວ່າມີມົນຂັງ
ລີ້ລັບນອນໃນແນບ
ສັກສິດລີລົ້ນກ້ອງ

ໄຫຫີນທົ່ງລືນາມ ເດີ!
ສິ່ງສັກສິດຝັງຊ້ອນ
ໄຫຫີນບັນດາໜ່ວຍ
ສົນສ້າງສິ່ງບັນດານ

✳ ເປັນກຳບັງແກ່ນກ້າ
ຜູ້ອີງອາດຄາວເສິກ
ໄດ້ຮັບໄຊໂຮຮ້ອງ
ປະຫວັດຂຽນຂີດແຕ້ມ

ກອງທັບບານທະຫານ
ຕ່ອຍຕີຝູງມານຮ້າຍ
ກຳຄັນທຸງກາງທົ່ງ
ຈາເວົ້າເລົ່າຂານ ນັ້ນນາ!

✳ ຄົນຮຸ່ນຫລັງເກີດຊ້າ
ເກີດບໍ່ທັນສະໄໝເສິກ
ທົ່ງໄຫອັນສັກສິດກວ້າງ
ຄົນຮຸ່ນຫລານລູກເຕົ້າ

ພານພົບພຽງປະຫວັດ
ເຫດຈິ່ງຄາວນັ້ນ
ກາຍເປັນປະຫວັດສາດ
ຝັງຮູ້ຜ່ານເລື່ອງລາວ

✳ ເສຍດາຍເຮົາເກີດຊ້າ
ຕອນນີ້ມີພຽງນຶກ
ຕາມວາໂຍໄຫລຍ້
ບົດນິທານທ່ານຜູ້

ມາພົບພຽງບົດຂຽນ ເດີ!
ເຈີດວຽນບິນຟ້າ
ດູເໝືອນກຳລັງເລົ່າ
ທະຫານກ້ານັກຮົບດັງ

✳ ສັນຍາລັກນິ່ງແຈ້ງ
ເໝືອນມີສິ່ງມະຫັດສະຈັນ
ທະຫານມີໄຊກ້າ
ມານຈາກໄປຝັ່ງຟ້າວ

ໄຊຊະນະເຂດໄຫຫີນ
ຊ່ວຍດົນບັນດານໃຫ້
ສັດຕູລາຫນີພ່າຍ
ເຮົາໄດ້ຮັບໄຊ ນັ້ນແລ້ວ!

ແປໂດຍ: ອາຈານ ແສງຈັນ ສຸຂະເສມ
ຮຽບຮຽງເປັນກອນໂດຍ: ກົງໃຈ ແສງອຳພັນ

## ເບີໂທສຸກເສີນ

❑ ຕຳຫລວດ

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

❑ ໜ່ວຍກູ້ໄພ

- ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ໜ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ໜ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625
- ມູນນິທິ ກູ້ໄພ ນາຄາ 1513

❑ ໂຮງໝໍ

- ມະໂຫສົດ 021 214018
- ມິດຕະພາບ 150 ຕຽງ 021 710006
- ເຊດຖາທິລາດ 021 351156
- ສູນຮັບແຈ້ງໄຂ້ຫວັດສັດປີກ

## ຊວນຍິ້ມ

\# ແອ່ນຕຸ້ງ

**ເລື່ອງ: ບໍ່ກ່ຽວກັບກູ**

ມື້ໜຶ່ງ ມີເດັກນ້ອຍສາມຄົນໄປທ່ຽວສວນສັດ ພາກັນເລາະເບິ່ງແຂ້ຢູ່ແຄມໜອງ ແລ້ວກໍພາກັນດຶກກ້ອນຫີນໃສ່, ຍ້ອນແຂ້ທົວເລີຍໃຈຮ້າຍ ຈຶ່ງໂດດເຂົ້າມາແຄມໜອງ, ສອງຄົນແລ່ນປົບ ແລະອີກຄົນໜຶ່ງຢືນເສີຍແບບບໍ່ຢ້ານ ໝູ່ສອງຄົນເຫັນກະເລີຍຮ້ອງມາໃສ່ : ຮີບແລ່ນໜີທະແມ ມຶງບໍ່ຢ້ານຕາຍຫວາ?

**ຜູ້ກ່ຽວ:** ກູຊິບັບໃຫ້ເມື່ອຍເຮັດຫຍັງ ແນວກູບໍ່ໄດ້ດຶກກ້ອນຫີນໃສ່ມັນ!!!



## ຄະຕິເຕືອນໃຈ

\# ດວງຕະຂອນ

ຮັກງົວໃຫ້ຜູກ
ຮັກລູກໃຫ້ສອນ



## ຄະນະ...

ນິຕິບັນຍັດ ໃນໄລຍະຜ່ານ ແລະ ປຶກສາຫາລືທິດທາງແຜນການໃນຕໍ່ໜ້າ.

ຫລັງຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ທັດສະນະສຶກສາເບິ່ງຕຶກອາຄານລັດຖະສະພາ, ກົງຈັກການຈັດຕັ້ງ, ກົນໄກ ແລະ ລະບົບການເຄື່ອນໄຫວວຽກງານຂອງສະພາຕໍ່າບູນເດັດສະຕາກ (Bundestag) ແລະ ສະພາສູງບູນເດັດຣາດ (Bundesrat) ແຫ່ງ ສສ. ເຢຍລະມັນ.

## ຄະນະປະຈຳ...

ດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 11 ເດືອນຜ່ານມາ (ມັງກອນ-ພະຈິກ ປີ 2022) ແລະ ທິດທາງແຜນການ ປະຈໍາປີ 2023 ເຊິ່ງທ່ານໄດ້ກ່າວວ່າ: ໃນຕອນບ່າຍຂອງວັນທີ 8 ທັນວາ 2022 ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດໍາເນີນວາລະພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 11 ເດືອນຜ່ານມາ ແລະ ທິດທາງແຜນການ ປະຈໍາປີ 2023 ເຊິ່ງວຽກງານດັ່ງກ່າວ ໄດ້ຮັບຮອງເອົາໃນວາລະກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ຕາມມະຕິສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021.

ພາຍຫລັງກອງປະຊຸມໄດ້ຮັບຟັງການລາຍງານຂອງລັດຖະບານແລະການປະກອບຄໍາເຫັນຂອງຕາງໜ້າຄະນະປະຈໍາສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ສຸມໃສ່ປະກອບຄໍາເຫັນດ້ວຍຄວາມຮັບຜິດຊອບສູງຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ໃນໄລຍະ 11 ເດືອນຜ່ານມາ ແລະ ທິດທາງແຜນການ ປະຈໍາປີ 2023 ເຊິ່ງການປະກອບຄໍາເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ທັງໝົດມີ 8 ທ່ານ, ຍິງ 1 ທ່ານ ສາມາດສັງລວມບັນດາເນື້ອໃນ ດັ່ງນີ້:

ໂດຍພື້ນຖານແມ່ນເຫັນດີກັບບົດລາຍງານຂອງລັດຖະບານ ເຫັນວ່າແຕ່ລະໜ້າວຽກແມ່ນມີຄວາມຄືບໜ້າຫລາຍຂຶ້ນກວ່າເກົ່າ ອັນພົ້ນເດັ່ນແມ່ນການຈັດຕັ້ງປະຕິບັດວຽກງານສ້າງຄວາມຮັບຮູ້ໃນທົ່ວສັງຄົມດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ກົດໝາຍ, ລະບຽບການ ແລະ ຜົນຮ້າຍຂອງຢາເສບຕິດໄດ້ມີການເຄື່ອນໄຫວ ເຂົ້າເຖິງເປົ້າໝາຍສ່ວນຫລາຍໃນສັງຄົມ ເຊັ່ນ: ສະຖາບັນຄອບຄົວ, ເປົ້າໝາຍຜູ້ເສບ ແລະ ຜູ້ຂາຍຢາເສບຕິດລາຍຍ່ອຍ ທີ່ຍັງບໍ່ທັນຮຸນແຮງ ເຊິ່ງກວມເອົາອັດຕາສ່ວນຫລາຍຂອງເປົ້າໝາຍພົວພັນຢາເສບຕິດ ຢູ່ແຕ່ລະທ້ອງຖິ່ນ, ສາມາດນໍາເອົາເປົ້າໝາຍດັ່ງກ່າວມາສຶກສາອົບຮົມ ເຮັດໃຫ້ເຂົາເຈົ້າຮັບຮູ້ຜົນຮ້າຍ, ຄວາມອັນຕະລາຍຂອງຢາເສບຕິດ, ຮັບຮູ້ການກະທໍາຜິດຂອງຕົນຕໍ່ກົດໝາຍ ແລະ ສາມາດສ້າງບົດບັນທຶກກັບເຂົາເຈົ້າ ເພື່ອຊອກຫາວິທີທາງອອກ ບໍ່ໄປພົວພັນກັບຢາເສບຕິດອີກ ເຊິ່ງພາຍຫລັງພວກເຂົາເຈົ້າເຫລົ່ານັ້ນ ໄດ້ຮັບການສຶກສາອົບຮົມສ່ວນຫລາຍກໍມີຄວາມຕື່ນຕົວ, ຢຸດເຊົາໄປໃນຕົວ ເຊິ່ງສະແດງໃຫ້ເຫັນວ່າທ້ອງຖິ່ນໃດປະຕິບັດໄດ້ຄືແນວນັ້ນ ສະພາບປາກົດການຫຍໍ້ທໍ້ຢູ່ທ້ອງຖິ່ນນັ້ນແມ່ນໄດ້ຫລຸດຜ່ອນລົງ ແລະ ມີຄວາມສະຫງົບ; ພ້ອມນີ້, ການເຄື່ອນໄຫວໃນການແກ້ໄຂບັນຫາຢາເສບຕິດຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ກໍເຫັນວ່າມີຄວາມຕັ້ງໜ້າຂຶ້ນກວ່າເກົ່າ, ສາມາດຂຶ້ນບັນຊີບັນດາເປົ້າໝາຍທີ່ພົວພັນກັບບັນຫາຢາເສບຕິດ ຢູ່ແຕ່ລະເມືອງ, ແຕ່ລະບ້ານ, ແຕ່ລະຄອບຄົວໄດ້ຢ່າງຊັດເຈນ, ສາມາດແກ້ໄຂບັນດາເປົ້າໝາຍຕ່າງໆໄດ້ດີພໍສົມຄວນ.

ແຕ່ເຖິງຢ່າງໃດກໍຕາມ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 11 ເດືອນ ປີ 2022 ຜ່ານມາ, ເຫັນວ່າການຜັນຂະຫຍາຍຍັງຊັກຊ້າ ແລະ ຍັງບໍ່ທັນກາຍເປັນຂະບວນການກວ້າງຂວາງ ການເຂົ້າຮ່ວມຂອງຂະແໜງການຕ່າງໆ ຍັງບໍ່ທັນມີຄວາມຕັ້ງໜ້າເທົ່າທີ່ຄວນ, ການປະຕິບັດຕາມພາລະບົດບາດຄວາມຮັບຜິດຊອບຍັງມີໜ້ອຍຂອງບາງຂະແໜງການ ລວມທັງອົງການຈັດຕັ້ງມະຫາຊົນ, ການແກ້ໄຂງົບປະມານຍັງຊັກຊ້າ ເຮັດໃຫ້ວຽກງານໃນແຜນການບໍ່ບັນລຸໄດ້ຕາມຄາດໝາຍທີ່ວາງໄວ້, ມີຫລາຍໜ້າວຽກທີ່ໄດ້ເຮັດໄປແລ້ວ ແຕ່ຍັງບໍ່ທັນໄດ້ກວດກາ, ປະເມີນຜົນຄືນ.

ເພື່ອສືບຕໍ່ສູ້ຊົນຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈໍາປີ 2023 ຄະນະປະຈໍາສະພາແຫ່ງຊາດ ສະເໜີລັດຖະບານ ດັ່ງນີ້:

1. ສືບຕໍ່ເພີ່ມທະວີຍົກສູງບົດບາດ ແລະ ຄວາມສາມາດໃນການນໍາພາ-ຊີ້ນໍາ ຂອງຄະນະພັກ ແລະ ອົງການລັດແຕ່ລະຂັ້ນ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ແຂງແຮງ ແລະ ເປັນຮູບປະທໍາຕົວຈິງຫລາຍຂຶ້ນກວ່າເກົ່າ ໂດຍມີສ່ວນຮ່ວມຂອງທຸກຂະແໜງການ, ການຈັດຕັ້ງອໍານາດການປົກຄອງຮາກຖານບ້ານ, ຕະຫລອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ, ທຸກຊັ້ນຄົນໃນສັງຄົມ ແລະ ພິເສດແມ່ນສະຖາບັນຄອບຄົວຕ້ອງເປັນເຈົ້າການເຂົ້າຮ່ວມຢ່າງເປັນຂະບວນການຕໍ່ເນື່ອງ ແລະ ເຮັດແທ້ທໍາຈິງຫລາຍຂຶ້ນກວ່າເກົ່າ;

2. ເອົາໃຈໃສ່ນໍາເອົາບັນດາກົດໝາຍ ແລະ ນິຕິກໍາຕ່າງໆ ສະບັບປັບປຸງໃໝ່ ທີ່ກ່ຽວຂ້ອງກັບການແກ້ໄຂບັນຫາຢາເສບຕິດ ລົງໄປເຜີຍແຜ່ແນະນໍາສົມທົບກັບການລົງໂຄສະນາສ້າງຄວາມຮັບຮູ້ໃຫ້ສັງຄົມ ກ່ຽວກັບຜົນຮ້າຍ ແລະ ຄວາມອັນຕະລາຍຂອງຢາເສບຕິດ ໃຫ້ທົ່ວເຖິງທຸກເປົ້າໝາຍໃນສັງຄົມ ໂດຍເລັ່ງໃສ່ເປົ້າໝາຍກຸ່ມສ່ຽງ ເປັນຕົ້ນແມ່ນກຸ່ມໃຊ້ແຮງງານ, ຜູ້ອອກແຮງງານ, ນັກຮຽນ-ນັກສຶກສາ, ຖັນແຖວໄວໜຸ່ມ ຕະຫລອດຮອດປະຊາຊົນບັນດາເຜົ່າຢູ່ເຂດຫ່າງໄກສອກຫລີກທີ່ມີລະດັບຊີວິດການເປັນຢູ່ພົບຄວາມຫຍຸ້ງຍາກ;

3. ປັບປຸງກົນໄກປະສານງານກ່ຽວກັບການດໍາເນີນຄະດີຢາເສບຕິດຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ອົງການສານປະຊາຊົນ, ອົງການປະຕິບັດຄໍາຕັດສິນ ຂອງສານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃຫ້ມີຄວາມກົມກຽວກັນແຕ່ຫົວທີບັນແຕ່ອອກສັ່ງຈັບຕົວ, ກັກຂັງພາງ, ສືບສວນ-ສອບສວນປະກອບສໍານວນຄະດີ, ຄົ້ນຄວ້າພິຈາລະນາສັ່ງຟ້ອງຜູ້ຕ້ອງຫາ ແລະ ການພິຈາລະນາຕັດສິນຄະດີ ຕ້ອງໃຫ້ມີຄວາມເດັດຂາດ, ໂປ່ງໃສ ໄປຕາມຂະບວນການຍຸຕິທໍາ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ; ພ້ອມນີ້, ສະເໜີໃຫ້ປະຕິບັດໂທດປະຫານຊີວິດໃຫ້ເປັນຮູບປະທໍາ ແນໃສ່ເຮັດໃຫ້ພວກເປົ້າໝາຍຄ້າຂາຍຢາເສບຕິດທີ່ເປັນຫົວໂປ່ໂຕການ ມີຄວາມຢ້ານກົວຕໍ່ກົດໝາຍ ແລະ ລະບຽບການ;

4. ເອົາໃຈໃສ່ຕໍ່ການບໍາບັດ-ປິ່ນປົວຜູ້ຕິດຢາເສບຕິດ ໃຫ້ມີຄຸນະພາບດີຂຶ້ນ ແລະ ສ້າງເງື່ອນໄຂໃຫ້ຜູ້ທີ່ຖືກເຄາະຮ້າຍທີ່ຕິດຢາເສບຕິດ ໄດ້ຮັບການເຂົ້າປິ່ນປົວຢູ່ໃນສູນ ຫລື ປິ່ນປົວຢູ່ຕາມບ້ານເຮືອນ ກໍຄືຢູ່ຊຸມຊົນຫລາຍຂຶ້ນ ໂດຍມີຂະແໜງການສາທາລະນະສຸກ ແລະ ກໍາລັງ ປກສ ເປັນເຈົ້າການໃນການຄຸ້ມຄອງ, ແນະນໍາໃນວຽກງານດັ່ງກ່າວ; ຄຽງຄູ່ກັນນັ້ນ, ຄົ້ນຄ້ວາສ້າງເງື່ອນໄຂໃຫ້ຜູ້ບໍາບັດຢາເສບຕິດຢູ່ສູນບໍາບັດ, ປິ່ນປົວໄດ້ຮັບການເຝິກອາຊີບ, ເຝິກສີມືແຮງງານເມື່ອເວລາອອກໄປ ຈຶ່ງຈະເຮັດໃຫ້ເຂົາເຈົ້າມີວິຊາອາຊີບຕິດໂຕໄປພ້ອມ ແລະ ບໍ່ໄປຫຍຸ້ງກ່ຽວກັບຢາເສບຕິດອີກ;

5. ສະເໜີໃຫ້ຊອກຫາທາງອອກ ແລະ ວິທີການແກ້ໄຂບັນຫາຄວາມແອອັດ ຂອງຜູ້ຕ້ອງຫາຢູ່ສະຖານທີ່ຄຸມຂັງຊົ່ວຄາວຢູ່ຂັ້ນເມືອງ, ຂັ້ນແຂວງ ແລະ ປະຕິບັດນະໂຍບາຍຢ່າງສົມເຫດສົມຜົນ ຕໍ່ຜູ້ຖືກຕ້ອງຫາ, ນັກໂທດໃນຄະດີຢາເສບຕິດ ແລະ ຄະດີອື່ນໆ ໂດຍສະເພາະແມ່ນຊີວິດການເປັນຢູ່, ສໍາຄັນໃນເວລາເຈັບເປັນ ໃຫ້ເຂົາເຈົ້າໄດ້ຮັບການປິ່ນປົວຮັກສາສຸຂະພາບ;

6. ເອົາໃຈໃສ່ຄຸ້ມຄອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ຖືກຕ້ອງຕາມນິຕິກໍາທີ່ກໍານົດໄວ້, ຄົ້ນຄວ້າປະຕິບັດນະໂຍບາຍຢ່າງເໝາະສົມ ຕໍ່ພະນັກງານ-ນັກຮົບ ແລະ ປະຊາຊົນຜູ້ໃຫ້ຂໍ້ມູນກ່ຽວກັບບັນຫາຢາເສບຕິດ. ຄຽງຄູ່ກັນນີ້, ສະເໜີໃຫ້ເພີ່ມທະວີໃນການປົກປັກຮັກສາ, ການເກັບມ້ຽນຂອງກາງໃນຄະດີຢາເສບຕິດໃຫ້ລວມສູນ, ໂປ່ງໃສ, ມີບັນຊີຕິດຕາມແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ, ບໍ່ເຮັດໃຫ້ຂອງກາງຄະດີຕົກເຮ່ຍເສຍຫາຍ, ເປ່ເພ ຫລືເຊື່ອມຄຸນນະພາບ, ການນໍາໃຊ້ຕ້ອງໃຫ້ຖືກຕ້ອງຕາມກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ທີ່ກໍານົດໄວ້;

7. ສະເໜີໃຫ້ກະຊວງປ້ອງກັນຄວາມສະຫງົບ ຊີ້ນໍາການຂຶ້ນບັນຊີຄຸ້ມຄອງຕິດຕາມກວດກາການເຄື່ອນໄຫວຂອງເປົ້າໝາຍພົວພັນຢາເສບຕິດ ເປັນຕົ້ນແມ່ນຜູ້ຄ້າ-ຂາຍ, ຜູ້ເສບ, ຜູ້ບໍາບັດຢາເສບຕິດອອກມາ ແລະ ຜູ້ພົ້ນໂທດຄະດີຢາເສບຕິດອອກມາສູ່ຄອບຄົວ ຕ້ອງໄດ້ສືບຕໍ່ຕິດຕາມຈາກອໍານາດການປົກຄອງຂັ້ນບ້ານ ແລະ ເຈົ້າໜ້າທີ່ຢ່າງຕໍ່ເນື່ອງ;

8. ສະເໜີໃຫ້ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບພາກສ່ວນກ່ຽວຂ້ອງ ຄຸ້ມຄອງນໍາໃຊ້ງົບປະມານທີ່ລັດຖະບານໄດ້ອະນຸມັດໃຫ້ນໍາໃຊ້ເຂົ້າໃນວຽກງານເຄື່ອນໄຫວຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຢາເສບຕິດ ໃຫ້ເກີດຜົນປະໂຫຍດສູງສຸດ;

9. ເອົາໃຈໃສ່ຄຸ້ມຄອງກໍາລັງພົນ ໃນ 2 ກໍາລັງ (ທະຫານ, ຕໍາຫລວດ) ເດັດຂາດບໍ່ໃຫ້ມີກໍລະນີຕິດພັນກັບຢາເສບຕິດ ເພື່ອເປັນແບບຢ່າງໃຫ້ແກ່ສັງຄົມ.

10. ສືບຕໍ່ເພີ່ມທະວີການຮ່ວມມືກັບສາກົນ ໂດຍສະເພາະແມ່ນບັນດາປະເທດທີ່ມີຊາຍແດນເຊື່ອມຈອດ ກັບ ສປປລາວ ເພື່ອຮ່ວມມືໃນການຕ້ານ, ສະກັດກັ້ນ, ອັດປ່ອງຂ້າມລອຍການຂົນສົ່ງ-ຄ້າຂາຍຢາເສບຕິດຢູ່ຕາມຊາຍແດນ, ດູດດຶງເອົາການສະໜັບສະໜູນ, ການຊ່ວຍເຫລືອທາງດ້ານເຕັກນິກ, ວິຊາການ, ທຶນຮອນ ແລະ ການແລກປ່ຽນຂໍ້ມູນ-ຂ່າວສານຈາກບັນດາປະເທດເພື່ອນມິດໃຫ້ໄດ້ຫລາຍຂຶ້ນ.

## ລັດຖະມົນຕີ...

ເພື່ອເປັນເຄື່ອງມືໃນການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານ ເພື່ອຜັນຂະຫຍາຍບາງເນື້ອໃນຈິດໃຈຂອງກົດໝາຍດັ່ງກ່າວ ສະພາທະນາຍຄວາມລາວ ໄດ້ອອກກົດລະບຽບພາຍໃນ ສະບັບເລກທີ 058/ສທຄ, ລົງວັນທີ 31 ມີນາ 2017 ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວໃຫ້ແກ່ສະພາທະນາຍຄວາມ ແລະ ທະນາຍຄວາມ, ຕໍ່ມາໃນປີ 2018 ກະຊວງຍຸຕິທໍາ ໄດ້ສະເໜີຂໍໃຫ້ລັດຖະບານອອກດໍາລັດ ສະບັບເລກທີ 77/ລບ, ລົງວັນທີ 28 ກຸມພາ 2018, ວ່າດ້ວຍການຊ່ວຍເຫລືອທາງດ້ານກົດໝາຍ ເພື່ອເປັນບ່ອນອີງໃຫ້ແກ່ການໃຫ້ການຊ່ວຍເຫລືອທາງດ້ານກົດໝາຍໃຫ້ແກ່ປະຊາຊົນຜູ້ທຸກຍາກ, ດ້ອຍໂອກາດ ຢ່າງເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ.

ກົດໝາຍວ່າດ້ວຍທະນາຍຄວາມ ເປັນກົດໝາຍສະບັບໜຶ່ງ ທີ່ມີຄວາມສໍາຄັນຕໍ່ວຽກງານທະນາຍຄວາມຢູ່ໃນ ສປປລາວ ເນື່ອງຈາກວ່າໄດ້ກໍານົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງທະນາຍຄວາມ ເພື່ອໃຫ້ມີຄວາມຖືກຕ້ອງ, ຍຸຕິທໍາ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງລູກຄວາມ, ຮັບປະກັນຄວາມຍຸຕິທໍາໃຫ້ແກ່ລູກຄວາມ, ສະໜອງຫລັກຖານໃຫ້ແກ່ການແກ້ໄຂຄະດີ ແລະ ສ້າງຄວາມສ້າງເງື່ອນໄຂໃນການເຂົ້າເຖິງຂະບວນການເຂັ້ມແຂງໃຫ້ແກ່ຂະບວນການຍຸຕິທໍາ, ຍຸຕິທໍາ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນ ແລະ ນັກລົງທຶນພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທໍາ.

ຜ່ານການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທະນາຍຄວາມ ແລະ ນິຕິກໍາໃຕ້ກົດໝາຍ ທີ່ໄດ້ກ່າວມານັ້ນ ສາມາດຕີລາຄາດ້ານດີໄດ້ ດັ່ງນີ້:

- ມີນິຕິກໍາເປັນເຄື່ອງມືທີ່ສໍາຄັນ ໃນການຈັດຕັ້ງປະຕິບັດວຽກງານທະນາຍຄວາມໃຫ້ມີຄວາມສະດວກເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ;
- ກະຊວງຍຸຕິທໍາ ສາມາດຄຸ້ມຄອງການເຄື່ອນໄຫວສະພາທະນາຍຄວາມໄດ້ ແລະ ຮັດກຸມຫລາຍຂຶ້ນ. ສະພາທະນາຍຄວາມ ແລະ ທະນາຍຄວາມ ກໍໄດ້ມີບ່ອນອີງໃນການເຄື່ອນໄຫວວຽກງານຂອງຕົນຢ່າງເປັນລະບົບ;
- ສັງຄົມກໍມີຄວາມຮັບຮູ້ ແລະ ເຂົ້າໃຈວຽກງານທະນາຍຄວາມນັບມື້ນັບຫລາຍຂຶ້ນ ເຊິ່ງສະແດງອອກໂດຍໄດ້ມີການໃຊ້ບໍລິການທະນາຍຄວາມຂອງບັນດາບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ເປັນຈໍານວນຫລາຍ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນຕາມກົດໝາຍ;
- ວຽກງານຊ່ວຍເຫລືອດ້ານກົດໝາຍຂອງທະນາຍຄວາມ ໃຫ້ແກ່ປະຊາຊົນ ເຊິ່ງເປັນວຽກງານໜຶ່ງທີ່ສໍາຄັນກໍໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫລືອຈາກອົງການຈັດຕັ້ງສາກົນຕ່າງໆ ໂດຍສະເພາະແມ່ນວຽກງານຊ່ວຍເຫລືອດ້ານກົດໝາຍແກ່ຜູ້ທຸກຍາກ ແລະ ດ້ອຍໂອກາດ ໂດຍໄດ້ໃຫ້ການຊ່ວຍເຫລືອໃຫ້ແກ່ສະພາທະນາຍຄວາມ ເພື່ອສົ່ງເສີມວຽກສະເພາະທະນາຍຄວາມ ແລະ ວຽກງານຊ່ວຍເຫລືອດ້ານກົດໝາຍແກ່ປະຊາຊົນໂດຍບໍ່ເສຍຄ່າ.

ຄຽງຄູ່ກັບດ້ານດີທີ່ກ່າວມາຂ້າງເທິງນີ້ ກໍຍັງມີຂໍ້ຄົງຄ້າງຫລາຍຢ່າງທີ່ຈະຕ້ອງໄດ້ປັບປຸງ ເພື່ອໃຫ້ມີຄວາມສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນປັດຈຸບັນ ດັ່ງນີ້:

- ສະພາບການພັດທະນາເສດຖະກິດສັງຄົມໄດ້ມີການຂະຫຍາຍຕົວສູງ, ຄວາມຮຽກຮ້ອງຕ້ອງການຂອງສັງຄົມ;ຕໍ່ກັບການບໍລິການທາງດ້ານກົດໝາຍກໍນັບມື້ນັບຫລາຍຂຶ້ນ ແຕ່ຈໍານວນທະນາຍຄວາມ ຍັງມີຈໍາກັດ, 8 ແຂວງ ຍັງບໍ່ມີທະນາຍຄວາມເທື່ອ ຈຶ່ງບໍ່ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມໄດ້ຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ;
- ມາດຕະຖານ ແລະ ເງື່ອນໄຂ ການເປັນທະນາຍຄວາມ ເປັນອຸປະສັກໃຫ້ແກ່ນັກສຶກສາກົດໝາຍທີ່ຈົບລະດັບຊັ້ນສູງ ແລະ ຜູ້ທີ່ອາຍຸຍັງບໍ່ທັນຮອດ 25 ປີ ຕ້ອງການປະກອບອາຊີບທະນາຍຄວາມ, ນອກຈາກນັ້ນການກໍ່ສ້າງວິຊາຊີບຍຸຕິທໍາຂອງສະຖາບັນຍຸຕິທໍາແຫ່ງຊາດ ແມ່ນໄດ້ຮັບເອົາຜູ້ທີ່ຈົບກົດໝາຍລະດັບຊັ້ນສູງຂຶ້ນໄປ ເພື່ອກໍ່ສ້າງຜູ້ພິພາກສາ, ພະນັກງານໄອຍະການ ແລະ ທະນາຍຄວາມ ແຕ່ຫລັງຈາກຈົບຫລັກສູດກໍ່ສ້າງດັ່ງກ່າວ ມີນັກສຶກສາຈໍານວນຫລວງຫລາຍ ບໍ່ສາມາດປະກອບອາຊີບທະນາຍຄວາມໄດ້ ແລະ ຍັງບໍ່ມີວຽກເຮັດງານທໍາ ໃນຂະນະທີ່ໂຄຕ້າຮັບນັກສຶກສາເຂົ້າປະກອບອາຊີບຜູ້ພິພາກສາ ແລະ ພະນັກງານໄອຍະການ ກໍມີຈໍານວນຈໍາກັດ. ສະນັ້ນ, ມາດຕະຖານ ແລະ ເງື່ອນໄຂດັ່ງກ່າວ ຈຶ່ງເປັນການຈໍາກັດການຂະຫຍາຍຈໍານວນສະມາຊິກສະພາທະນາຍຄວາມ, ເຮັດໃຫ້ຫລາຍແຂວງຍັງບໍ່ມີທະນາຍຄວາມ ແລະ ບໍ່ສາມາດຕອບສະໜອງໃນການໃຫ້ການບໍລິການທາງດ້ານກົດໝາຍໄດ້ຢ່າງທົ່ວເຖິງ;
- ການກໍານົດການກໍ່ສ້າງທະນາຍຄວາມ ຍັງບໍ່ທັນຈະແຈ້ງ, ຊັດເຈນ ເນື່ອງຈາກວ່າການເຝິກອົບຮົມວິຊາຊີບທະນາຍຄວາມ ມີຢູ່ທີ່ສະຖາບັນຍຸຕິທໍາແຫ່ງຊາດ ແລະ ສະພາທະນາຍຄວາມເປັນຜູ້ຈັດເຝິກອົບຮົມເອງ ຈຶ່ງຕ້ອງໄດ້ກໍານົດໃຫ້ຈະແຈ້ງຂຶ້ນຕື່ມ;
- ການກໍານົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງປະກອບສະພາທະນາຍຄວາມ ຍັງບໍ່ຈະແຈ້ງ ແລະ ຄົບຖ້ວນ ເຮັດໃຫ້ການຄຸ້ມຄອງບໍລິຫານວຽກງານສະພາທະນາຍຄວາມ ແລະ ການຄຸ້ມຄອງທະນາຍຄວາມພົບຄວາມຫຍຸ້ງຍາກ;

ອ່ານຕໍ່ສະບັບໜ້າ...



## ເຮົາບໍ່ໂງ່ດອກ

**# ໂດຍ: ບ່າວກະບື**

ຕໍາຫລວດທ່ານໜຶ່ງ ຄຸມນັກໂທດໄປເຂົ້າຄຸກ, ພໍດີໝວກຂອງເຂົາຖືກລົມພັດປິວໄປ.

ນັກໂທດ: "ຊິໃຫ້ຂ້ານ້ອຍແລ່ນໄປເອົາມາໃຫ້ທ່ານບໍ່?"

ຕໍາຫລວດ: "ບໍ່ຕ້ອງຄິດວ່າກູໂງ່ເນີ. ມຶງຢືນຢູ່ນີ້, ກູຊິໄປເອົາເອງ".

(ບົດຕະຫລົກອິນເດຍໂດຍ: Sameer Agarwal)

## I'M NOT DUMB

**# By: BAOKBU**

A Policeman was escorting a prisoner to jail when his hat blew off.

Prisoner: "Shall I run and get it for you?"

Policeman: "You must not think I'm dumb. You stand here and I'll get it"

(Indian Joke by Sameer Agarwal)

# ຈີນ ຈັດຕັ້ງປະຕິບັດຄວາມຮັບຜິດຊອບ ໃນການພັດທະນາຊົນນະບົດຢ່າງຮອບດ້ານ

**ແປ ແລະ ຮຽບຮຽງ: ທະນາກອນ**

ອີງຕາມການລາຍງານອາທິດຜ່ານມາ ໃຫ້ຮູ້ວ່າ: ຫ້ອງວ່າການສູນກາງພັກຄອມມູນິດຈີນ, ຫ້ອງວ່າການລັດຖະບານຈີນ ໄດ້ເຜີຍແຜ່ "ວິທີຈັດຕັ້ງປະຕິບັດຄວາມຮັບຜິດຊອບໃນການພັດທະນາຊົນນະບົດໃຫ້ຈະເລີນ" ເຊິ່ງມີຈຸດປະສົງຕົ້ນຕໍເພື່ອຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍ ແລະ ວຽກງານທີ່ກ່ຽວຂ້ອງໃຫ້ໜັກແໜ້ນ, ຮັບປະກັນໜ້າທີ່ວຽກງານສໍາຄັນດ້ານຕ່າງໆໃນການຊຸກຍູ້ການພັດທະນາຊົນນະບົດໃຫ້ຈະເລີນຢ່າງຮອບດ້ານນັ້ນໄດ້ຮັບຄວາມຄືບໜ້າຢ່າງແທ້ຈິງ.



**ຄາດໝາຍລວມມີ:**

**ໜຶ່ງ:** ຊົນນະບົດແຫ່ງຕ່າງໆມີທ່າແຮງດ້ານຊັບພະຍາກອນທໍາມະຊາດ, ໄລຍະການພັດທະນາ ແລະ ພື້ນຖານດໍາເນີນງານທີ່ແຕກຕ່າງກັນ,ຕ້ອງປະສານສົມທົບກັບສະພາບຄວາມເປັນຈິງຂອງທ້ອງຖິ່ນຕົນຢ່າງໃກ້ຊິດ, ຈັດຕັ້ງປະຕິບັດຄວາມຮັບຜິດຊອບໃນການພັດທະນາຊົນນະບົດຢ່າງໜັກແໜ້ນ, ກໍານົດຈຸດສໍາຄັນຂອງໜ້າທີ່ວຽກງານຕາມທຸກທ້ອງຖິ່ນ ແລະ ທຸກປະເພດ, ປະສານສົມທົບໃນການຊຸກຍູ້ຄວາມຈະເລີນດ້ານອຸດສາຫະກໍາ, ຜູ້ມີຄວາມຮູ້ຄວາມສາມາດ, ວັດທະນະທໍາ, ສິ່ງແວດລ້ອມນິເວດ ແລະ ການຈັດຕັ້ງຢູ່ຊົນນະບົດ.

**ສອງ:** ຈັດຕັ້ງປະຕິບັດຄວາມຮັບຜິດຊອບຫລັກຂອງຄະນະພັກ ແລະ ອົງການປົກຄອງທຸກຂັ້ນໃນວຽກງານພັດທະນາຊົນນະບົດໃຫ້ຈະເລີນຢູ່ທ້ອງຖິ່ນຕົນ, ເນັ້ນໜັກເຖິງຄວາມຮັບຜິດຊອບຂອງທຸກພາກສ່ວນ ແລະ ທຸກຂະແໜງການ, ເສີມຂະຫຍາຍບົດບາດຂອງໜ່ວຍງານຊີ້ນໍາວຽກງານຊົນນະບົດຂອງຄະນະພັກທຸກຂັ້ນໃນການກໍາແໜ້ນໜ້າທີ່ລວມ ແລະ ການປະສານງານ, ປະສານສົມທົບວຽກງານພັດທະນາຊົນນະບົດໃຫ້ຈະເລີນທີ່ແຈກຢາຍຢູ່ຫລາຍພາກສ່ວນ ແລະ ຫລາຍຂົງເຂດໃຫ້ເປັນເອກະພາບກັນ, ກາຍເປັນກໍາລັງສັງລວມດ້ານນະໂຍບາຍ ແລະ ການດໍາເນີນງານແຫ່ງການພັດທະນາຊົນນະບົດໃຫ້ຈະເລີນ.

**ສາມ:** ປະຕິບັດຄວາມຮຽກຮ້ອງດ້ານການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານໃນທົ່ວຂະບວນການ ແລະ ທຸກຂອດໃນການພັດທະນາຊົນນະບົດໃຫ້ຈະເລີນ, ຍຶດໝັ້ນຖືຄຸນນະພາບເໜືອປະລິມານ, ປະສິດທິຜົນຕົວຈິງຢູ່ເໜືອຄວາມໄວ, ເດັດດ່ຽວຄັດຄ້ານລັດທິຮູບແບບ ແລະ ລັດທິອາຍາສິດ, ຊຸກຍູ້ວຽກງານພັດທະນາຊົນນະບົດດ້ານຕ່າງໆຢູ່ກັບການເຮັດວຽກຕົວຈິງ ແລະ ແກ້ໄຂບັນຫາຫຍຸ້ງຍາກໃຫ້ກັບຊາວກະສິກອນ, ເຮັດໃຫ້ຊາວກະສິກອນມີຄວາມຮູ້ສຶກໄດ້ຮັບຜົນປະໂຫຍດ, ຄວາມຮູ້ສຶກມີຄວາມສຸກ ແລະ ຄວາມຮູ້ສຶກມີຄວາມປອດໄພທີ່ຫລາຍກວ່າເກົ່າໃນການພັດທະນາຊົນນະບົດໃຫ້ຈະເລີນ.

**ສີ່:** ປັບປຸງໂຄງປະກອບຊີ້ນໍາ-ນໍາພາວຽກງານຊົນນະບົດທີ່ຄະນະພັກເປັນຜູ້ຊີ້ນໍາ-ນໍາພາເປັນເອກະພາບກັນ, ອົງການປົກຄອງເປັນຜູ້ຮັບຜິດຊອບ, ພາກສ່ວນວຽກງານຊົນນະບົດຂອງຄະນະພັກເປັນຜູ້ປະສານງານ, ຈັດຕັ້ງປະຕິບັດຕາມຄາດໝາຍທີ່ເລຂາພັກຂັ້ນແຂວງ, ຂັ້ນນະຄອນ, ຂັ້ນເມືອງ, ຂັ້ນຕາແສງ ແລະ ຂັ້ນບ້ານເປັນຜູ້ຮັບຜິດຊອບໃນການພັດທະນາຊົນນະບົດໃຫ້ຈະເລີນ.

ເວົ້າລວມແລ້ວ, "ວິທີຈັດຕັ້ງປະຕິບັດຄວາມຮັບຜິດຊອບໃນການພັດທະນາຊົນນະບົດໃຫ້ຈະເລີນ" ດັ່ງກ່າວ ມີຄວາມໝາຍສໍາຄັນຕໍ່ການຊຸກຍູ້ການພັດທະນາຊົນນະບົດໃຫ້ຈະເລີນຢ່າງຮອບດ້ານນັ້ນໃຫ້ໄດ້ຮັບປະສິດທິຜົນຕົວຈິງ, ມີຜົນດີຕໍ່ການສ້າງລະບົບຄວາມຮັບຜິດຊອບໃນການພັດທະນາຊົນນະບົດໃຫ້ຈະເລີນ, ເສີມສ້າງກົນໄກຊຸກຍູ້ການພັດທະນາຊົນນະບົດໃຫ້ຈະເລີນຢ່າງເຂັ້ມແຂງ ແລະ ຊຸກຍູ້ການສ້າງສະພາບການດໍາເນີນງານທີ່ທົ່ວພັກທົ່ວທົ່ວສັງຄົມຮ່ວມແຮງຮ່ວມໃຈກັນຊຸກຍູ້ການພັດທະນາຊົນນະບົດໃຫ້ຈະເລີນ.

**ແຫລ່ງຂໍ້ມູນ: CRI**

# ນິວຊີແລນ ຜ່ານກົດໝາຍ ຫ້າມຄົນເກີດຫລັງ 2008 ຊື້-ສູບ ຢາສູບ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**

*ລັດຖະສະພານິວຊີແລນ ໄດ້ຜ່ານກົດໝາຍສະບັບໃໝ່ ຈໍາກັດຄົນທີ່ເກີດຫລັງປີ 2008 ບໍ່ໃຫ້ຊື້ຢາສູບ ຫລືຜະລິດຕະພັນຢາສູບອື່ນໆ ເພື່ອກ້າວໄປສູ່ປະເທດທີ່ປອດຄວັນຢາສູບ.*



ສໍານັກຂ່າວ BBC ລາຍງານວ່າ: ເມື່ອວັນອັງຄານທີ 13 ທັນວາ 2022 ລັດຖະສະພານິວຊີແລນ ໄດ້ຜ່ານກົດໝາຍ "ສິ່ງແວດລ້ອມປອດຄວັນຢາສູບ ແລະ ຜະລິດຕະພັນທີ່ມີການຄວບຄຸມ" ເຊິ່ງກໍານົດໃຫ້ຜູ້ທີ່ເກີດວັນທີ 1 ມັງກອນ 2009 ເປັນຕົ້ນໄປ ບໍ່ສາມາດຊື້ຢາສູບ ຫລື ຜະລິດຕະພັນຢາສູບອື່ນໆໄດ້ ໂດຍມີຜົນບັງຄັບໃຊ້ເລີ່ມແຕ່ປີໜ້າ.

ກົດໝາຍສະບັບນີ້ ຈະຫລຸດຈໍານວນປະຊາຊົນນິວຊີແລນທີ່ສາມາດຊື້ຢາສູບໄດ້ທຸກໆປີ ເຊັ່ນ ເມື່ອຮອດປີ 2050 ຄົນອາຍຸ 40 ປີ ຖືວ່າອາຍຸນ້ອຍເກີນໄປທີ່ຈະຊື້ຢາສູບ.

ທ່ານ ດຣ. ອາຍີຊາ ເວີຣອນ ລັດຖະມົນຕີກະຊວງສາທາລະນະສຸກ ເຊິ່ງຜູ້ທີ່ນໍາສະເໜີກົດໝາຍນີ້ ກ່າວວ່າ: "ນີ້ແມ່ນອີກບາດກ້າວໜຶ່ງໄປສູ່ອະນາຄົດທີ່ປອດຄວັນຢາສູບ ໃນອະນາຄົດປະຊາຊົນຫລາຍພັນຄົນຈະມີອາຍຸຍືນຍາວຂຶ້ນ, ສຸຂະພາບດີຂຶ້ນ ແລະ ລະບົບສຸຂະພາບຈະມີເງິນເພີ່ມເຕີມ 5 ຕື້ໂດລານິວຊີແລນ ເພາະບໍ່ຈໍາເປັນຕ້ອງໃຊ້ເພື່ອປິ່ນປົວພະຍາດທີ່ເກີດຈາກການສູບຢາອີກ".

ບົດລາຍງານສະຖິຕິຂອງລັດຖະບານ ທີ່ເປີດເຜີຍໃນເດືອນພະຈິກຜ່ານມາ ສະແດງໃຫ້ເຫັນວ່າ ປັດຈຸບັນ, ປະເທດນິວຊີແລນກໍາລັງປະສົບກັບອັດຕາການສູບຢາຕໍ່າສຸດໃນປະຫວັດສາດຂອງປະເທດ, ຫລຸດລົງຈາກ 9,4% ເຫລືອພຽງ 8% ແລະ ລັດຖະບານຫວັງວ່າ ກົດໝາຍວ່າດ້ວຍສິ່ງແວດລ້ອມທີ່ປອດຄວັນຢາສູບ ຈະຊ່ວຍຫລຸດຕົວເລກລົງຕໍ່າກວ່າ 5% ໃນປີ 2025 ໂດຍເປົ້າໝາຍສຸດທ້າຍແມ່ນຢຸດສູບຢາທັງໝົດ.

ກົດໝາຍສະບັບນີ້ ຍັງຈໍາກັດຈໍານວນຜູ້ຂາຍຍ່ອຍທີ່ສາມາດຂາຍຜະລິດຕະພັນຢາສູບໄດ້ ເຊິ່ງຈະຫລຸດລົງເຫລືອໄວ້ພຽງ 600 ແຫ່ງໃນທົ່ວປະເທດ ຈາກຈໍານວນປັດຈຸບັນທີ່ມີ 6.000 ແຫ່ງ ແລະ ຫລຸດຜ່ອນລະດັບສານນິໂຄຕິນ ໃນຜະລິດຕະພັນເພື່ອເຮັດໃຫ້ເກີດສານເສບຕິດໜ້ອຍລົງ.

ທ່ານ ດຣ. ອາຍີຊາ ເວີຣອນ ໃຫ້ຮູ້ຕື່ມວ່າ: "ນີ້ໝາຍຄວາມວ່າ ສານນິໂຄຕິນ ຈະຖືກຫລຸດລົງໃນລະດັບທີ່ບໍ່ເສບຕິດ ແລະ ສັງຄົມຈະບໍ່ເພີ່ມຈໍານວນຜູ້ຂາຍປີກເພີ່ມອີກ, ກົດໝາຍນີ້ຈະເຮັດໃຫ້ອາຍຸສະເລ່ຍລະຫວ່າງປະຊາຊົນເມົາຣີ ເຊິ່ງມີອັດຕາການສູບຢາສູງ 19,9% ກວ່າໝູ່ທຽບກັບກຸ່ມອື່ນໆ ເຂົ້າໃກ້ກັນຫລາຍຂຶ້ນ".

ຢ່າງໃດກໍຕາມ, ກົດໝາຍສະບັບໃໝ່ບໍ່ໄດ້ຫ້າມການຊື້ຜະລິດຕະພັນຢາສູບອີເລັກໂຕຣນິກ ເຊິ່ງເປັນທີ່ນິຍົມໃນກຸ່ມຄົນຮຸ່ນໃໝ່ຂອງນິວຊີແລນຫລາຍກວ່າຢາສູບທໍາມະດາ.

ໃນຂະນະດຽວກັນ, ກຸ່ມນັກການເມືອງບາງກຸ່ມ ລວມທັງພັກຝ່າຍຄ້ານ ໄດ້ຕໍານິຕິຕຽນກົດໝາຍສະບັບນີ້ ແລະ ເຕືອນວ່າຈະເຮັດໃຫ້ມີການຂາຍຢາສູບຢູ່ຕະຫລາດມືດທີ່ຜິດກົດໝາຍ ແລະ ທໍາລາຍທຸລະກິດຂະໜາດນ້ອຍ.

ທະນາຄານພັດທະນາລາວ
LDB Bank

ທະນາຄານພົງສະຫວັນ
Phongsavanh BANK







**ຜູ້ຊີ້ນໍາ**
ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄໍາວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ
ທ່ານ ເປຄໍາ ລໍຄໍາສອນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອໍາພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ